ໂຄງການປະເມີນຜົນການຄ້າ ແລະ ສິ່ງແວດລ້ອມແບບຮີບດ່ວນ (RTEA)

# ເອກະສານການ ຄົ້ນຄວ້າ

## ຜົນກະທົບຕໍ່ສິ່ງແວດລ້ອມ ຂອງການຄ້າເສລີ ໃນຂະແໜງ ໄມ້ ແລະ ຜະລິດຕະພັນໄມ້, ສ.ປ.ປ ລາວ

ທັນວາ **2007**


ກົມປ່າໄມ້

ທ່ານ ສຸຊາດ ໄຊຍະກຸມມານ

ທ່ານ ວິງໄຊ ມະນີວົງ



ຮຽບຮຽງໂດຍ : ທ່ານ ນາງ ສາບຣີນາ ຊໍ່ສ໌ (IISD) ແລະ ທ່ານ ທອມ ຄາແລນເດີ (IUCN).



International Institute for Sustainable Development
Institut international du développement durable

Sida

IUCN
The World Conservation Union

@  2007 ສະຖາບັນສາກົນເພື່ອການພັດທະນາແບບຍືນຍົງ (IISD)

ຈັດພິມໂດຍ ສະຖາບັນສາກົນເພື່ອການພັດທະນາແບບຍືນຍົງ

ຄະນະດ້ານປຶກສາວິຊາການ (Expert Advisory Panel) ຂອງໂຄງການ RTEA  ໄດ້ເຮັດບົດຄົ້ນຄ້ວາ 7 ບົດທີ່ກວມເອົາຂະແໜງເສດຖະກິດທີ່ສຳຄັນ 9 ຂະແໜງໂດຍມີຈຸດປະສົງຕີລາຄາການ ຄ້າ ແລະ ສິ່ງແວດລ້ອມ. ສຳລັບ ສ.ປ.ປ.ລາວ ຄະນະທີ່ປຶກສາດັ່ງກ່າວນີ້ ປະກອບມີຜູ້ສ່ວນຮ່ວມ ຈາກຂະແໜງການເອກກະຊົນ  ແລະ ລັດຖະບານທີ່ສຳຄັນ  ແລະ ໄດ້ສ້າງຕັ້ງຂຶ້ນເພື່ອຕອບສະໜອງ ການຊີ້ນຳລວມ ຕໍ່ຂະບວນການຕີລາຄາດັ່ງກ່າວນີ້.  ເອກະສານຄົ້ນຄ້ວາດັ່ງກ່າວນີ້ໄດ້ສະໜອງຂໍ້ມູນຄວາມເປັນມາຕ່າງໆທີ່ສຳຄັນ    ແລະ  ໃຫ້ຂໍ້ສະເໜີແນະນຳດ້ານນະໂຍບາຍສະເພາະຂະແໜງ ເພື່ອການປະເມີນຕີລາຄາ ແລະ ເອກກະສານທີ່ເປັນພາສາລາວນີ້ ຍັງຖືວ່າເປັນ ການປະກອບສ່ວນ ທີ່ມີຄຸນຄ່າຕໍ່ກັບໜ່ວຍງານຄົ້ນຄ້ວາພາຍໃນປະເທດທີ່ກຳລັງຂະຫຍາຍຕົວຂຶ້ນ  ແລະ ແນໃສ່ສາຍພົວພັນທີ່ສະຫຼັບຊັບຊ້ອນລະຫ່ວາງການຄ້າ ແລະ ສິ່ງແວດລ້ອມຢູ່ ສ.ປ.ປ.ລາວ.

ການຄົ້ນຄ້ວາຊຸດນີ້ໄດ້ຮັບການປະສານງານຈາກອົງການ STEA  ແລະ ອົງການ IUCN

ຮຽບຮຽງໂດຍ : ທ່ານ ນາງ ສາບຣີນາ ຊໍສ໌  (IISD) ແລະ ທ່ານ ທອມ ຄາແລນເດີ (IUCN).

**ເອກກະສານຄວາມເປັນມາຂອງການຄົ້ນຄ້ວາສາມາດເອົາໄດ້ທີ່** www.iisd.org

RTEA
ເອກະສານຄວາມເປັນມາຂອງການຄົ້ນຄວ້າ
ໂດຍການມອບໝາຍຂອງໂຄງການປະເມີນຜົນກະທົບແບບຮີບ
ດ່ວນກ່ຽວກັບການຄ້າ & ສິ່ງແວດລ້ອມ ທັນວາ 2007

# ຜົນກະທົບຕໍ່ສິ່ງແວດລ້ອມຂອງການຄ້າເສລີໃນຂະແໜງ ໄມ້ ແລະ ຜະລິດຕະພັນໄມ້, ສ.ປ.ປ ລາວ

ໂດຍ: ສຸຊາດ ໄຊຍະກູມມານ ແລະ ວົງໄຊ ມະນະວົງ*

## ພາກສະເໜີ

ໄມ້ ແລະ ຜະລິດຕະພັນໄມ້ທີ່ຖືກປຸງແຕ່ງແລ້ວມີບົດບາດສຳຄັນຫຼາຍໃນເສດຖະກິດຂອງປະເທດ. ໃນຊຸມປີ 1990, ຜະລິດຕະພັນເຫຼົ່ານີ້ໄດ້ກວມເອົາ 40% ຂອງລາຍໄດ້ຈາກການສົ່ງອອກ ແລະ ເກືອບເຄິ່ງໜຶ່ງຂອງລາຍໄດ້ດັ່ງກ່າວ ນີ້ແມ່ນມາຈາກການສົ່ງອອກໄມ້ທ່ອນຢ່າງດຽວ (CPI & UNDP 2006). ໃນຊ່ວງໄລຍະເວລາດັ່ງກ່າວນີ້ຂະແໜງປ່າໄມ້ໄດ້ເຕີບໃຫຍ່ຂະ ຫຍາຍໂຕໄວກວ່າສ່ວນທີ່ເຫຼືອຂອງເສດຖະກິດ, ດ້ວຍການເພີ້ມຂື້ນຂອງການຂຸດຄົ້ນໄມ້ທ່ອນຈາກ 300,000 ມ$^3$ ໃນປີ 1990 ຫາ 734,000 ມ$^3$ ໃນປີ 1998.ເຖິງຢ່າງໃດກໍ່ຕາມ,ນັບແຕ່ນັ້ນເປັນຕົ້ນມາ, ຍ້ອນຄວາມເປັນຫ່ວງເປັນໄຍກ່ຽວ ກັບມູນລະຄ່າຕ່ຳຂອງການສົ່ງອອກດັ່ງກ່າວນັ້ນ ແລະ ການຫລຸດລົງຂອງຊັບພະຍາກອນປ່າໄມ້ ຂອງປະເທດໃນຜ່ານມາ, ລັດຖະບານ ຈຶ່ງໄດ້ຫ້າມການສົ່ງອອກໄມ້ທ່ອນດິບ (2001), ໄດ້ສັ່ງໃຫ້ຫລຸດຜ່ອນການສົ່ງອອກໄມ້ເລື່ອຍ (2004) ແລະ ໄດ້ຫລຸດ ຜ່ອນການຂຸດຄົ້ນໄມ້ປະຈຳປີລົງຮອດ 150,000 ມ$^3$ ສຳລັບປີ 2004/05, ແລະ ຕໍ່ມາໄດ້ເພີ້ມຂື້ນຮອດ 370,000 ມ$^3$ ໃນ ປີ 2005/06 (ໄດ້ໄມ້ເພີ້ມຕື່ມຈາກເຂດພື້ນທີ່ໂຄງການພະລັງງານໄຟຟ້ານ້ຳເທີນ 2).

ປັດຈຸບັນນີ້ລັດຖະບານສົ່ງເສີມການປຸງແຕ່ງໄມ້ໃນເຂດລຸ່ມນ້ຳ ແລະ ການສົ່ງອອກຜະລິດຕະພັນໄມ້ທີ່ປຸງແຕ່ງສຳເລັດ ແລະ ເຄິ່ງສຳເລັດຮູບຢ່າງໜັກແໜ້ນ, ເຊິ່ງໄດ້ນຳໄປສູ່ການເຕີບໃຫຍ່ຂະຫຍາຍຕົວຂອງອຸດສະຫະກຳປຸງແຕ່ງໄມ້ໃນ ສ ປ ປ ລາວ. ເຖິງຢ່າງໃດກໍ່ຕາມ, ໃນຄະນະທີ່ມີໂຮງງານປຸງແຕ່ງໄມ້ອັນດັບປະເພດສອງຈຳນວນໜຶ່ງ, ແຕ່ການປະຕິຮູບແມ່ນຊັກຊ້າມາຮອດປັດຈຸບັນນີ້, ແລະ ອຸດສະຫະກຳໄມ້ຂອງ ສປປ ລາວ ແມ່ນຍັງຢູ່ໃນບາດກ້າວເບື້ອງຕົ້ນຂອງການພັດທະນາ, ສ່ວນໃຫຍ່ແລ້ວປະກອບມີໂຮງເລື່ອຍຂະໜາດນ້ອຍ ແລະ ຂະໜາດກາງ, ໂຮງງານໄມ້ອັດ ແລະ ໂຮງງານປຸງແຕ່ງໄມ້ອື່ນໆ.

ໃນປີ 2004, ການສົ່ງອອກຜະລິດຕະພັນໄມ້ທີ່ຖືກປຸງແຕ່ງໃນໂຮງງານ (ສ່ວນຫຼາຍແລ້ວແມ່ນໄມ້ປູພື້ນ, ເຄື່ອງເຟີນີເຈີ, ເຄື່ອງໃຊ້ສ່ອຍຕ່າງໆທີ່ເຮັດຈາກໄມ້, ໄມ້ອັດ, ຜະລິດຕະພັນໄມ້ທ່ອນທີ່ໄດ້ຖືກປຸງແຕ່ງແລ້ວ) ຄິດເປັນເງິນ 6 ລ້ານໂດລະສະຫະລັດ, ເຖິງຢ່າງໃດກໍ່ຕາມ, ບໍລິມາດຂອງການສົ່ງອອກຈຳນວນມະຫາສານແມ່ນໄມ້ ຫຼື ໄມ້ເລື່ອຍ ແລະ ໄມ້ແປ້ນແບບພື້ນຖານ (ທັ້ງໆທີ່ມີຄຳສັ່ງໃຫ້ຫລຸດຜ່ອນ), ໂດຍບໍ່ມີມູນລະຄ່າຖືກເພີ້ມເຂົ້າຫຼາຍປານໃດ (144.9 ລ້ານໃນປີ 2004). ການສົ່ງອອກທີ່ມີມູນລະຄ່າສູງເຊັ່ນເຄື່ອງເຟີນີເຈີຍັງຄົງຕ່ຳຫຼາຍຢູ່, ລະຫວ່າງ 1.7-3.2 % (CPI & UNDP 2006). ອີກຢ່າງໜຶ່ງ, ມັນຍັງຖືກລາຍງານ ໃນບົດລາຍງານການພັດທະນາຊັບພະຍາກອນມະນຸດແຫ່ງຊາດ 2006 ວ່າການສົ່ງອອກໄມ້ທ່ອນ ບໍ່ເປັນທາງການຍັງມີສືບຕໍ່ ແລະ ໃນຄວາມຈິງແລ້ວ ກຳລັງເພີ້ມຂື້ນໃນຊຸມປີຜ່ານມາມໍ່ໆນີ້.ຄວາມຕ້ອງການໄມ້ໃນ ພາກພື້ນແມ່ນມີສູງ. ບັນດາຜູ້ນຳເຂົ້າຫຼັກສຳລັບໄມ້ ແລະ ພະລິດຕະພັນໄມ້ຂອງລາວແມ່ນປະເທດໄທ, ຫວຽດນາມ, ຈີນ ແລະ ຢີ່ປຸ່ນ. ໃນປັດຈຸບັນນີ້ຄວາມຕ້ອງຈຳນວນມະຫາສານແມ່ນກຳລັງມາຈາກປະເທດຈີນ, ດ້ວຍການນຳເຂົ້າພະລິດ ຕະພັນໄມ້ທ່ອນເຂົ້າສູ່ປະເທດເພີ້ມຂື້ນຈາກ14 ລ້ານ ຫາ 45 ລ້ານແມັດກ້ອນໃນພຽງ 10 ປີ (White et al. 2006). ເປັນທີ່ກະ ຈ່າງແຈ້ງວ່າ ສປປ ລາວ ຈະຕ້ອງສືບຕໍ່ຫລຸດຜ່ອນ ການສົ່ງອອກຜະລິດຕະພັນໄມ້ທີ່ມູນລະຄ່າຕ່ຳໃຫ້ແກ່ປະ

* ທ່ານ Sousath Sayakhoummane ແລະ Vongxay Manivong ເຮັດວຽກໃຫ້ກົມປ່າໄມ້, ກະຊວງກະສິກຳ-ປ່າໄມ້

ເຫດເຫຼົ່ານັ້ນ ແລະ ຈະຕ້ອງເລັ່ງໃສ່ສ້າງມູນລະຄ່າເພີ້ມໃຫ້ແກ່ ຂະແໜງປຸງແຕ່ງໄມ້ຂອງປະເທດຕົນເອງ (ITC 2006). ຢາກເຮັດໄດ້ຄືແນວນັ້ນ, ຄວາມເຂົ້າໃຈ, ການເຊື່ອມຕໍ່ ແລະ ການເພີ້ມສາຍພົວພັນກັບຕະຫຼາດໃນພາກພື້ນ ແລະ ໃນສາກົນແມ່ນເປັນສິ່ງສໍາ ຄັນຫຼາຍທີ່ສຸດ (CPI & UNDP 2006).

ໃນປັດຈຸບັນນີ້, ຫຼາຍປະເທດທີ່ກໍາລັງພັດທະນາມີສ່ວນຮ່ວມ ໃນການເຈລະຈາຂະໜາດໃຫຍ່ຈໍານວນຫຼາຍຄັ້ງທີ່ກໍາລັງເພີ້ມຂຶ້ນນັ້ນໄດ້ຖືກອອກແບບມາເພື່ອເຊື່ອມຕໍ່ພວກມັນເຂົ້າໃນລະບົບການຄ້າສາກົນ. ສປປ ລາວ ແມ່ນເປັນຕົວຢ່າງອັນໜຶ່ງຂອງແນວໂນ້ມອັ່ງງດັ່ງກ່າວນີ້, ແລະ ແມ່ນຢູ່ໃນຂະບວນການເຂົ້າເປັນສະມາຊິກຂອງອົງການການຄ້າໂລກ ແລະ ມີສ່ວນຮ່ວມ ໃນການເປັນເຈົ້າພາບການເຈລະຈາສອງຝ່າຍຫຼາຍຄັ້ງກັບບັນດາສາມະຊິກທີ່ມີຢູ່ນັ້ນ,ເຊິ່ງກໍາລັງແຜ່ຂະຫຍາຍອອກຢ່າງກວ້າງຕະຫຼອດຫຼາຍປີຜ່ານມາ. ນັບຕັ້ງແຕ່ ສປປ ລາວໄດ້ເປັນສາມະຊິກຂອງກຸ່ມອາຊຽນເປັນຕົ້ນມາ, ປະເທດລາວຈະຈັດຕັ້ງປະຕິບັດຂໍາຕົກລົງ AFTA ໃນປີ 2008 ແລະ ເຂົ້າມີສ່ວນຮ່ວມໃນການເຈລະຈາລະຫວ່າງກຸ່ມອາຊຽນ ແລະ ປະເທດຈີນກ່ຽວກັບເຂດການຄ້າເສລີໃໝ່ເຊິ່ງຖືກກໍານົດໃຫ້ສໍາເລັດ ແລ້ວ ກ່ອນປີ 2010.

ປະຫວັດຄວາມເປັນມາຂອງການພັດທະນາການຄ້າໃນ ສປປ ລາວ ແມ່ນຮູບແບບການພັດທະນາເສດຖະກິດແບບບຸກເບີກ;ເປັນປະເທດດ້ອຍພັດທະນາທີ່ກໍາລັງເຮັດວຽກ ເພື່ອສ້າງເສດຖະກິດຂອງຕົນເອງໃຫ້ມີຄວາມເສລີ,ໄດ້ຮັບຄວາມເດືອດຮ້ອນຈາກຄວາມບໍ່ດຸ່ນດ່ຽງຂອງການຄ້າທີ່ກໍາລັງຮຸນແຮງ,ໜີ້ສິນພານອກ ແລະ ການຂາດດຸນບັນຊີທີ່ກໍາລັງເພີ້ມຂຶ້ນ. ໃນເວລາດຽວກັນນີ້, ການເຕີບໂຕທີ່ສໍາຄັນໃນການສົ່ງອອກແມ່ນກໍາລັງເກີດຂຶ້ນ ສ່ວນໃຫຍ່ແລ້ວໂດຍຜ່ານການຂຸດຄົ້ນ ແລະ ການຂາຍຄວາມອຸດົມຮັ່ງມີທາງດ້ານຊັບພະຍາກອນທໍາມະຊາດຂອງປະເທດຊາດ ໂດຍສະເພາະແລ້ວ,ການເຕີບໂຕຂອງພະລັງຄັບເຄື່ອນການລົງທຶນໂດຍກົງຂອງຕ່າງປະເທດເຂົ້າໃນຂະແໜງຂຸດຄົ້ນບໍ່ແຮ່. ການສົ່ງອອກພືດເສດຖະກິດ, ຜະລິດຕະພັນປ່າໄມ້ ແລະ ໄຟຟ້ານໍ້າຕົກລ້ວນແລ້ວແຕ່ເປັນອົງປະກອບເສີມຂອງການພັດທະນາເສດຖະກິດທີ່ໄດ້ຮັບການເອົາໃຈໃສ່ເປັນຢ່າງສູງທີ່ກໍາລັງເກີດຂຶ້ນຢູ່ໃນ ສປປ ລາວ ໃນປັດຈຸບັນນີ້.

ເອກະສານດັ່ງກ່າວນີ້ກວດກາເບິ່ງ ບັນດາຜົນກະທົບຕໍ່ສິ່ງແວດລ້ອມຂອງການຄ້າແບບເສລີກ່ຽວກັບຂະແໜງໄມ້ ແລະ ຜະລິດຕະພັນໄມ້ທີ່ໄດ້ຖືກປຸງແຕ່ງ, ໂດຍສະເພາະແລ້ວ, ເລັ່ງໃສ່ອຸດສະຫະກໍາປຸງແຕ່ງໄມ້ ແລະການຕອບສະໜອງໄມ້ທີ່ມາຈາກປ່າໄມ້ທໍາມະຊາດ ແລະ ປ່າໄມ້ທີ່ປູກເອົາເຂົ້າໃນຂະແໜງການດັ່ງກ່າວນີ້. ເອກະສານດັ່ງກ່າວນີ້ຈະເປັນກໍລະນີໜຶ່ງເພື່ອປະກອບສ່ວນເຂົ້າໃນ ການພັດທະນາເຄື່ອງມືຕີລາຄາປະເມີນສະພາບການຄ້າແບບຮີບດ່ວນ ໂດຍອີງໃສ່ຫຼັກການຕ່າງໆ ຂອງການຕີລາຄາປະເມີນຜົນກະທົບຕໍ່ສິ່ງແວດລ້ອມ ແລະ ການຕີລາຄາປະເມີນຍຸດທະສາດດ້ານສິ່ງແວດລ້ອມ. ມັນຍັງມີຈຸດປະສົງແນໃສ່ເພື່ອກໍານົດຄວາມສົນໃຈທາງດ້ານຍຸດທະສາດ ໃນການເຈລະຈາລະດັບສາກົນ ແລະ ການວາງແນວທາງນະໂຍບາຍ ເຊິ່ງອີງໃສ່ການປຶກສາຫາລືແບບຖີ່ຖ້ວນຮອບຄອບ ແລະ ການຕີລາຄາປະເມີນຜົນການເຊື່ອມໂຍງພາຍໃນປະເທດລະຫວ່າງການຄ້າ ແລະ ສິ່ງແວດລ້ອມ.

# ພາກທີ 1

# ສະພາບລວມຂອງຂະແໜງໄມ້ ແລະ ປຸງແຕ່ງໄມ້

## 1.1 ການກ້າວສູ່ການຜະລິດໄມ້ໃຫ້ມູນລະຄ່າສູງຂຶ້ນ ແລະ ການສົ່ງອອກ

ຫວ່າງບໍ່ນານມານີ້, ກະຊວງການຄ້າ ແລະ ອຸດສະຫະກໍາ (MoCI & ITC 2006) ເປີດເຜີຍຮ່າງການດໍາເນີນຍຸດທະສາດການສົ່ງອອກ 2006-2008 ຂອງຕົນ. ຍຸດທະສາດດັ່ງກ່າວນີ້ເນັ້ນໃຫ້ເຫັນທ່າແຮງບົ່ມ ຊ້ອນຂອງອຸດສະຫະກໍາປຸງແຕ່ງໄມ້ເພື່ອເຮັດໃຫ້ເຕີບໃຫຍ່ ແລະ ເພີ້ມມູນລະຄ່າການສົ່ງອອກຕ່າງໆຂອງຕົນເອງ. ເຖິງຢ່າງໃດກໍ່ຕາມ, ມັນຍັງເນັ້ນໃຫ້ເຫັນສິ່ງທ້າທາຍຫຼາຍຢ່າງທ່າມກາງພວກມັນເອງ, ປະເດັນຕ່າງໆທີ່ກ່ຽວກັບການສະໜອງວັດຖຸດິບ, ການເຂົ້າເຖິງການເງິນຍັງຕໍ່າ, ທັກສະຍັງຕໍ່າໃນການເຮັດເຟີນິເຈີ ແລະ ການອອກແບບ, ແລະ ຂາດເທັກໂນໂລຢີເພື່ອປັບປຸງອຸດສະຫະກໍາປຸງແຕ່ງໄມ້ພາຍໃນປະເທດ ແລະ ປະກອບສ່ວນມູນຄ່າເພີ່ມຂອງການສົ່ງອອກຢູ່ໃນຂະແໜງການດັ່ງກ່າວ.

ໃນປີ 2001, ມີໂຮງເລື່ອຍ 160 ແຫ່ງ, ໂຮງງານໄມ້ອັດ 2 ແຫ່ງ ແລະ ໂຮງງານຜະລິດເຟີນີເຈີຂະໜາດນ້ອຍ 1,269 ແຫ່ງໃນ ສປປ ລາວ, ສ່ວນໃຫຍ່ແລ້ວພວກມັນຕັ້ງຢູ່ສູນກາງ ແລະ ແຂວງພາກໃຕ້. ຄວາມສາມາດລວມທັງໝົດໃນການຜະລິດປະຈຳປີທີ່ຄາດຄະເນໄວ້ນັ້ນແມ່ນປະມານ 1.2 ລ້ານ ມ$^3$ ຂອງໄມ້ທ່ອນທີປ່ອຍເຂົ້າ (Southavilay 2002). ມີຄວາມເປັນຫ່ວງເປັນໄຍຈຳນວນໜຶ່ງວ່າຫຼາຍໆທຸລະກິດເຫຼົ່ານີ້ ແມ່ນກຳລັງດຳເນີນງານຢ່າງບໍ່ມີປະສິດທິພາບ, ຜະລິດຕະພັນທີ່ບໍ່ໄດ້ມາດຕະຖານປານໃດ ແລະ ສ້າງຄວາມກົດດັນຕື່ມຕໍ່ກັບຊັບພະຍາກອນປ່າໄມ້ ຂອງປະເທດໂດຍຜ່ານການຕັດໄມ້ທ່ອນຜິດກົດໝາຍ. ຄາດຄະເນວ່າມີພຽງແຕ່ 20% ຂອງໂຮງງານເຟີນີເຈີຂະໜາດນ້ອຍ 1,269 ແຫ່ງໃນ ສປປ ລາວ ເຮັດໄດ້ຕາມມາດຕະຖານ ແລະ ຄວາມຮຽກຮ້ອງຕ້ອງການຂອງລັດຖະບານໃຫ້ເປັນໂຮງງານປຸງແຕ່ງໄມ້ສຳເລັດຮູບ. ຍ້ອນຄວາມທຸ້ມເທພະຍາຍາມ ຂອງອຳນາດການປົກຄອງຕ່າງໆ ຫວ່າງບໍ່ນານມານີ້, ບັນດາໂຮງງານທີ່ບໍ່ໄດ້ຄົບຕາມມາດຕະຖານໃນບາງແຂວງໄດ້ຖືກສັ່ງໃຫ້ເປີດ ຫຼື ໃຫ້ພະຍາຍາມຫຍຸບເຂົ້າກັບໂຮງງານອື່ນໆເພື່ອເພີ້ມປະສິດທິພາບ (*Vientiane Times* 2007).

ນະໂຍບາຍຂອງລັດຖະບານລາວແມ່ນເພື່ອຊຸກຍູ້ສົ່ງເສີມຄວາມທັນສະໄໝ ແລະ ການເຊື່ອມຕໍ່ບັນດາໂຮງງານປຸງແຕ່ງໄມ້ ໂດຍໃຊ້ຄວາມທຸ້ມເທພະຍາຍາມ ເພື່ອເພີ້ມທະວີຄວາມສາມາດໃນການດຳເນີນງານ ແລະ ປັດໃຈການປົກປັກຮັກສາ. ເຖິງຢ່າງໃດກໍ່ຕາມ, ທັງໆທີ່ມີການລົງທຶນຢ່າງໜັກໜ່ວງເຂົ້າໃນຂະແໜງປຸງແຕ່ງໄມ້ກໍ່ຕາມ, ແຕ່ຄວາມທຸ້ມເທພະຍາຍາມຂອງລັດຖະບານ ບໍ່ບັນລຸໄດ້ຕາມການຄາດໝາຍໄວ້ເນື່ອງຈາກການຕອບສະໜອງວັດຖຸດິບບໍ່ສະໝໍ່າສະເໝີ. ອຸດສະຫະກຳຂະໜາດໃຫຍ່ທີ່ຖືກດຶງດູດເຂົ້າມາ ສປປ ລາວ ນັ້ນເປັນທຶນເສີມອັນມະຫາສານ ແລະ ຂ້ອນຂ້າງສ້າງການຈ້າງງານໄດ້ໜ້ອຍໜຶ່ງເຂົ້າໃນການປຸງແຕ່ງໄມ້ເບື້ອງຕົ້ນ (ໄມ້ເລື່ອຍ, ແຜນໄມ້ອັດ).

## 1.2 ການຕອບສະໜອງໃຫ້ແກ່ຂະແໜງປຸງແຕ່ງໄມ້ທ້ອງຖິ່ນ

ຄຽງຄູ່ກັບສິ່ງທ້າທາຍ ທີ່ຂະແໜງປຸງແຕ່ງໄມ້ປະເຊີນໜ້າເພື່ອເຮັດ ໃຫ້ໄດ້ຕາມຄວາມຮຽກຮ້ອງຕ້ອງການຜະລິດຜະລິດຕະພັນໃຫ້ມີມູນລະຄ່າສູງຂຶ້ນ, ຍັງມີຄວາມເປັນຫ່ວງເປັນໄຍ ທີ່ສຳຄັນຫຼາຍຢ່າງກ່ຽວກັບການຕອບສະໜອງໄມ້ເສດເຫຼືອໃຫ້ແກ່ຂະແໜງການດັ່ງກ່າວນີ້.

ຂີດຄວາມສາມາດທີ່ໄດ້ຖືກຕິດຕັ້ງແລ້ວໃນອຸດສະຫະກຳດັ່ງກ່າວ ນີ້ແມ່ນສູງຫຼາຍໃນປັດຈຸບັນນີ້, ແລະ ຫ່າງເຫີນກັບສະພາບຄວາມຈິງ ຂອງບໍລິມາດໄມ້ທີ່ໄດ້ຮັບອະນຸຍາດໃຫ້ຕັດປະຈຳປີ (AAC). ຄວາມສ່ຽງອີກອັນໜຶ່ງ ທີ່ຕິດພັນກັບຄວາມສາມາດຂະໜາດໃຫຍ່ ໃນການປຸງແຕ່ໄມ້ກໍ່ຄືວ່ານັກລົງທຶນກົດດັນໃຫ້ລັດຖະບານລາວ ແລະ ອຳນາດການປົກຄອງແຂວງ ເພື່ອຄໍ້ປະກັນການຕອບສະໜອງວັດຖຸດິບໃຫ້ຫຼາຍຂຶ້ນຕື່ມ ເພື່ອດຳເນີນໂຮງເລື່ອຍຂອງພວກເຂົາເຈົ້າໃຫ້ມີຜົນກຳໄລໄດ້, ໃນຄ່າໃຊ້ຈ່າຍຂອງການຄຸ້ມຄອງບໍລິຫານຊັບພະຍາກອນປ່າໄມ້ແບບຍືນຍົງ.

ບໍລິມາດການຕັດໄມ້ທ່ອນ ແມ່ນຖືກກຳນົດໂດຍໂກຕາຕັດໄມ້ທ່ອນ ທີ່ອອກໃຫ້ໂດຍນາຍົກລັດຖະມຸນຕີ, ເຖິງຢ່າງໃດກໍ່ຕາມນັບຕັ້ງແຕ່ການຈັດຕັ້ງປະຕິບັດ ກົນໄກເສດຖະກິດໃໝ່, ອຳນາດການປົກຄອງແຂວງຍັງມີສິດອຳນາດເພື່ອອອກໃບອະນຸຍາດຕັດໄມ້ທ່ອນສຳລັບການຊົມໃຊ້ໄມ້ເພີ້ມຕື່ມ, ສ່ວນໃຫຍ່ແລ້ວແມ່ນເລັ່ງໃສ່ເພື່ອເປັນລາຍໄດ້ຂອງແຂວງ. ສິ່ງດັ່ງກ່າວນີ້ໄດ້ຖືກບວກເຂົ້າໃນໂກຕາໄມ້ປະຈຳປີຕື່ມ ແລະ ເຮັດໃຫ້ລະບົບດັ່ງກ່າວນີ້ບໍ່ຈະແຈ້ງ. ຍັງມີການຂາດແຜນການຄຸ້ມຄອງປ່າໄມ້ ແບບຍືນຍົງ(ປ່າໄມ້ຜະລິດ) ລວມທັງການເຕີບໂຕ ແລະ ຂໍ້ມູນດ້ານສະມັດຕະພາບບໍ່ເປັນທີ່ຮັບຮູ້, ໃນປັດຈຸບັນນີ້ໄມ້ທ່ອນແລະ ໄມ້ແມ່ນມາຈາກເຂດພື້ນທີ່ບໍ່ໄດ້ຮັບການອະນຸຍາດ, ລວມທັງບາງຈຳນວນມາຈາກເຂດປ່າສະຫງວນແຫ່ງຊາດ ແລະ ເຂດປ່າປ້ອງກັນ.

ຮອດປີ 2020, ການບໍລິໂພກໄມ້ທ່ອນ ແລະ ໄມ້ອັດພາຍໃນປະເທດຈະເພີ້ມສູງຂຶ້ນຮອດ 300,000 ມ$^3$ ຕໍ່ປີໂດຍປະມານ, ສັນນິຖານເທົ່າກັບແຕ່ລະການບໍລິໂພກທຶນ. ສິ່ງດັ່ງກ່າວນີ້ເທົ່າກັບໄມ້ກົມ 600,000 ມ$^3$ ໂດຍປະມານໃນອັດຕາສ່ວນ 50% ຂອງການປ່ຽນສະພາບໄມ້. ຖ້າຫາກການສົ່ງອອກໄມ້ທ່ອນຍັງຄົງຮັກສາໃນລະດັບປັດຈຸບັນນີ້, ຈະຮຽກຮ້ອງໃຫ້ມີຕັດໄມ້ທອນລວມທັງໝົດຫຼາຍກວ່າ 1 ລ້ານ ມ$^3$. ໃຫ້ຮັກສາການຕັດໄມ້ທ່ອນ 300,000 ມ$^3$ ໂດຍປະມານຕໍ່ປີໃນ

ລະດັບທີ່ສາມາດຍືນຍົງໄດ້, ມັນປະກົດວ່າການປູກໄມ້ຈະຕ້ອງ ຕອບສະໜອງອັດຕາສວນໃຫຍ່ຂອງໄມ້ທ່ອນໃຫ້ທັງການບໍລິໂພກພາຍໃນ ແລະ ການສົ່ງອອກ (MAF 2005).

## 1.3 ຄວາມເປັນຫ່ວງເປັນໄຍດ້ານສິ່ງແວດລ້ອມໃນຂະແໜງການດັ່ງກ່າວນີ້:

ຂະແໜງປຸງແຕ່ງໄມ້ໃນ ສປປ ລາວ ໄດ້ວັດຖຸດິບມາຈາກປ່າໄມ້ທຳມະຊາດພາຍໃຕ້ລະບົບໂກຕາ ຫຼື ປ່າໄມ້ທີ່ປູກເອົາ. ສະນັ້ນແລ້ວຄວາມເປັນຫ່ວງເປັນໄຍທີ່ສຳຄັນທີ່ຕິດພັນກັບຂະແໜງການດັ່ງກ່າວນີ້ຈຶ່ງລວມມີ:

- ການທຳລາຍປ່າໄມ້;
- ການສູນເສຍການປ້ອງກັນແຫຼ່ງຕົ້ນນ້ຳລຳທານ; ແລະ
- ການສູນເສຍຊີວະນາໆພັນ

ໂດຍສະເພາະແລ້ວ ສປປ ລາວ ເປັນປະເທດທີ່ມີຊັບພະຍາກອນປ່າໄມ້ອັນລ້ຳຄ່າ, ເປັນປະໂຫຍດ ແລະ ຫາກໄດ້ຍາກທີ່ສຸດ ໂດຍທາງດ້ານລະບົບນິເວດວິທະຍາຖ້າສົມທຽບໃສ່ກັບ ບັນດາປະເທດເພື່ອນບ້ານ. ເຖິງຢ່າງໃດກໍ່ຕາມ, ການປົກຄຸມຂອງປ່າໄມ້ດັ່ງກ່າວນີ້ກຳລັງຫລຸດລົງ. ບົດລາຍງານກ່ຽວກັບການຕີລາຄາປະເມີນການປົກຄຸມຂອງປ່າໄມ້ ແລະ ການນຳໃຊ້ທີ່ດິນໃນຊ່ວງປີ 1992-2002 (DoF & MAF 2005) ຊີ້ໃຫ້ເຫັນວ່າໃນປີ 1992 ປ່າໄມ້ຊ້ອນຂ້າງອຸດົມສົມບູນ, ກວມເອົາ47% ຂອງປະເທດ, ດ້ວຍຄວາມໜາແໜ້ນ 20% ຫຼື ຫຼາຍກວ່າ[1]. ແຕ່ໃນປີ 2002, ຄວາມໜາແໜ້ນກວມເອົາພຽງແຕ່ 41.5 % ເທົ່ານັ້ນ, ດ້ວຍການຫລຸດລົງຂອງຄຸນນະພາບ. ໃນອັດຕາສ່ວນດັ່ງກ່າວນີ້, ການປົກຄຸມຂອງປ່າໄມ້ຈະເປັນຮອດ 30% ເມື່ອຮອດປີ 2020. ສາເຫດຫຼັກອັນໜຶ່ງຂອງການຫລຸດລົງດັ່ງກ່າວນີ້ແມ່ນການຕັດໄມ້ທ່ອນ, ແລະການບູກເບີກປ່າໄມ້ປະເພດທຳມະດາ ແລະ ປ່າໄມ້ປະເພດສອງສຳລັບການປູກຕົ້ນໄມ້ເພື່ອຕອບສະໜອງໄມ້ໃຫ້ແກ່ຂະແໜງໄມ້ ແລະ ຜະລິດຕະພັນໄມ້.

ການຫລຸດລົງຂອງປ່າໄມ້ແມ່ນຍັງຕິດພັນກັບການສູນເສຍຊີວະນາໆພັນ (ທັງສາຍພັນຕ່າງໆ ແລະ ລະບົບນິເວດ)ແລະມີຜົນກະທົບທາງລົບຕໍ່ກັບແຫຼ່ງຕົ້ນນ້ຳລຳທານ. ການຫລຸດລົງດັ່ງກ່າວນີ້ສາມາດສົ່ງຜົນກະທົບຢ່າງໜັກໜ່ວງຕໍ່ກັບຊຸມຊົນທ້ອງຖິ່ນ ແລະ ເສດຖະກິດທ້ອງຖິ່ນ. ມີຄວາມເປັນຫ່ວງເປັນໄຍເພີ້ມຂຶ້ນສຳລັບຜົນກະທົບໃນທາງກົງກັນຂ້າມຕໍ່ກັບເສດຖະກິດ ແລະ ສັງຄົມຈາກການຫລຸດລົງຂອງການປົກຄຸມຂອງປ່າໄມ້, ຫລຸດລົງຈາກ 70% ໃນປີ 1940, ໂດຍສະເພາະແລ້ວ ການທຳລາຍປ່າໄມ້ ແລະ ການຂຸດໂຊມປ່າໄມ້ ສົ່ງຜົນກະທົບຕໍ່ກັບກຸ່ມຄົນທີ່ທຸກຈຳນວນໜຶ່ງຂອງປາຊາກອນ, ເຊິ່ງເປັນຜົດດຳລົງຊີວິດຢູ່ໃນປ່າໄມ້ ແລະ ອາໃສຊັບພະຍາກອນປ່າໄມ້ເຂົ້າໃນການປັບປຸງຊີວິດການເປັນຢູ່ຂອງພວກເຂົາເຈົ້າເປັນສ່ວນໃຫຍ່.

## 1.4 ກອບວຽກງານດ້ານນະໂຍບາຍ ແລະ ກົດລະບຽບສຳລັບຂະແໜງປຸງແຕ່ງໄມ້ໃນ ສປປ ລາວ

ໃນໄລຍະຜ່ານມາ, ການຈັດຕັ້ງປະຕິບັດ ແລະ ການບັງຄັບໃຊ້ກົດໝາຍ ແລະ ກົດລະບຽບກ່ຽວກັບການຄຸ້ມຄອງປ່າໄມ້ຍັງອ່ອນ ເນື່ອງຈາກຂາດຄວາມເປັນເອກະພາບໃນດ້ານມູມໜອງທັດສະນະ, ຄວາມຮັບຮູ້ ແລະ ການຈັດຕັ້ງປະຕິບັດໃນທຸກຂັ້ນ ແລະ ທຸກຂະໜງການ. ສິ່ງດັ່ງກ່າວນີ້ກຳລັງນຳໄປສູ່ການຝ່າຝືນຂໍ້ບັງຄັບ ແລະ ກົດລະບຽບປ່າໄມ້. ຫຼາຍໆອົງການຈັດຕັ້ງທ້ອງຖິ່ນ (ໃນຂັ້ນແຂວງ ແລະ ເມືອງ) ບໍ່ເຄົາລົບນັບຖືກົດລະບຽບປ່າໄມ້ຢ່າງເຂັ້ມງວດ, ໂດຍສະເພາະແມ່ນອົງການຄຸ້ມຄອງການຕັດໄມ້ທ່ອນ ແລະ ການສົ່ງອອກໄມ້ເຊັ່ນວ່າ: ການຕັດໄມ້ /ການຕັດໄມ້ທ່ອນເກີນທີ່ຈຳນວນໂກຕາທີ່ໄດ້ຮັບອະນຸມັດ ຫຼື ການອອກໃບອະນຸຍາດສົ່ງອອກໄມ້ໂດຍບໍ່ເຄົາລົບຕາມກົດລະບຽບຕ່າງໆທີ່ກ່ຽວຂ້ອງ. ປ່າໄມ້, ປ່າໄມ້ຜະລິດ ແລະ ການປູກຕົ້ນໄມ້ທັງໝົດນັ້ນແມ່ນຖືກຄວບຄຸມດູແລໂດຍກະຊວງກະສິກຳ-ປ່າໄມ້. ຈົດມາຮອດຫວ່າງບໍ່ນານມານີ້, ບັນດາໂຮງງານປຸງແຕ່ງໄມ້ແມ່ນຍັງຖືກຄວບຄຸມດູແລໂດຍກະຊວງກະສິກຳ-ປ່າໄມ້ເປັນສ່ວນ ໃຫຍ່,ເຖິງຢ່າງໃດກໍ່ຕາມ, ປະຕິບັດຕາມການຄົ້ນຄວ້າປຶກສາຫາລື ແລະ ການດັດແກ້ກົດໝາຍປ່າໄມ້ ແລະ ກົດໝາຍ ອຸດສະຫະ

---

[1] *ການກຳນົດປ່າໄມ້ປັດຈຸບັນນີ້, ປ່າໄມ້ທຳມະຊາດ ຫຼື ປ່າໄມ້ທີ່ປູກເອົາດ້ວຍຄວາມໜາແໜ້ນ 20% ຫຼື ຫຼາຍກວ່າ, ພື້ນທີ່ໜ້ອຍສຸດ 0.5 ຮຕ ແລະ ສະເລຍຄວາມສູງຂອງຕົ້ນໄມ້ 5 ແມັດ ຫຼື ຫຼາຍກວ່າ. ປ່າໄມ້ໄຜ່, ປ່າເຫຼົ່າ ແລະ ປ່າໄມ້ທີ່ບໍ່ສະຫງວນຮັກສາໄວ້ດ້ວຍຄວາມໜາແໜ້ນໜ້ອຍກວ່າ 20% ແມ່ນບໍ່ຖືກນັບເປັນປ່າໄມ້ໃນປະຈຸບັນນີ້..*

ກຳປຸງແຕ່ງ (ຮັບຮອງໂດຍສະພາແຫ່ງຊາດໃນປີ 2005), ດຽວນີ້ໂຮງງານປຸງແຕ່ງໄມ້ແມ່ນຖືກຄວບຄຸມດູແລ ໂດຍກະຊວງອຸດສະຫະກຳ ແລະ ການຄ້າທີ່ໄດ້ທີ່ຖືກສ້າງຕັ້ງຂຶ້ນໃໝ່ (ໃນເມື່ອກ່ອນເປັນກະຊວງອຸດສະຫະກຳ ແລະ ຫັດ ຖະກຳ).

- **ບັນດາເລື່ອງທີ່ສຳຄັນຂອງນະໂຍບາຍລັດຖະບານໃນຂະແໜງການດັ່ງກ່າວນີ້:**
  - ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ (CPI 2006) ຂອງ ລັດຖະບານແຫ່ງ ສປປ ລາວ, ຮຽກຮ້ອງຄວາມສອດຄ່ອງກົມກືນກັນລະຫວ່າງນະໂຍບາຍການພັດທະນາ ເສດຖະກິດກັບນະໂຍບາຍ ກ່ຽວກັບການປົກຮັກສາ ແລະ ການພັດທະນາຊັບພະຍາກອນທຳມະຊາດ.
  - ການຕັດສິນໃຈຂອງນາຍົກລັດຖະມຸນຕີ ກ່ຽວກັບການຮັບຮອງຜົນໄດ້ຮັບຂອງກອງປະຊຸມປ່າໄມ້ທົ່ວປະເທດ, ຈັດຂຶ້ນ ໃນວັນທີ 01/03/2007 (25/ນຍ) 2007.
  - ຄຳສັ່ງຂອງນາຍົກລັດຖະມຸນຕີກ່ຽວກັບເພີ້ມການຄວບຄຸມ ໃນການຄຸ້ມຄອງບໍລິຫານປ່າໄມ້, ການອະນຸລັກປ່າໄມ້ ແລະ ທຸລະກິດໄມ້ ແລະ ສົ່ງເສີມການຜະລິດຜະລິດຕະພັນສຳເລັດຮູບໃນອຸດສະຫະກຳປຸງແຕ່ງໄມ້ (31/ນຍ), 2006
- **ປະເພດປ່າໄມ້ (ປ່າຜະລິດ ແລະ ປ່າໄມ້ບ້ານ)**
  - ຍຸດທະສາດປ່າໄມ້ຮອດປີ 2020 ເຊິ່ງໄດ້ກຳນົດຍຸດທະສາດຕ່າງໆສຳລັບປ່າຜະລິດ, ການພັດທະນາການປູກຕົ້ນໄມ້, ການຂຸດຄົ້ນໄມ້/ການຕັດໄມ້ທ່ອນ, ອຸດສະຫະກຳປຸງແຕ່ງໄມ້ ແລະ ການອະນຸລັກສິ່ງແວດລ້ອມ(ປ່າໄມ້, ຊີວະນາໆ ພັນ ແລະ ແຫຼ່ງຕົ້ນນ້ຳລຳທານ) (MAF 2005).
  - ດຳລັດ 59/ນຍ/2002 ຕອບສະໜອງໃຫ້ແກ່ການສ້າງຕັ້ງ ແລະ ການຄຸ້ມຄອງເຂດບໍລິເວນປ່າຜະລິດທີ່ກວ້າງໃຫຍ່ ແລະ ເຊື່ອມຕິດຕໍ່ກັນໃຫ້ເປັນເຂດພື້ນທີ່ປ່າຜະລິດ (PFA).
  - ປ່າຜະລິດໃນ ສປປ ລາວ ເປັນປະເພດປ່າໄມ້ສະໜິດໜຶ່ງທີ່ກຳນົດຈະແຈ້ງຕາມກົດໝາຍ, ໄດ້ແຍກອອກຕ່າງຫາກໂດຍກົດໝາຍປ່າໄມ້ປີ 1996 ຈາກປ່າອະນຸລັກ, ປ່າປ້ອງກັນ.
  - ບ້ານໄດ້ຮັບການຈັດສັນປ່າໄມ້ບ້ານເປັນສ່ວນໃຫຍ່ແລ້ວໂດຍຜ່ານແຜນງານການມອບດິນ-ມອບປ່າ.
  - ໃນປ່າຜະລິດຂອງບ້ານ ຫຼື ປ່າຊົມໃຊ້ຂອງບ້ານ, ການຂຸດຄົ້ນໄມ້ສຳລັບການນຳໃຊ້ໂດຍຊາວບ້ານແມ່ນໄດ້ຮັບອະນຸຍາດ (ກົດໝາຍປ່າໄມ້ ມາດຕາ 28 ແລະ ກົດລະບຽບຂອງກະຊວງກະສິກຳ-ປ່າໄມ້ ເລກທີ: 535 ກ່ຽວກັບການ ຄຸ້ມຄອງປ່າໄມ້ບ້ານ). ຊາວບ້ານຍັງເຂົ້າຮ່ວມໃນກິດຈະກຳການຄຸ້ມຄອງການຄ້າໄມ້ທ່ອນ ແລະ ຜະລິດຕະພັນປ່າ ໄມ້ອື່ນໆເມື່ອມີປ່າຜະລິດຢູ່ພາຍໃນຂອບເຂດບ້ານຂອງພວກເຂົາເຈົ້າ (Phanthanousy & Sayakoummane 2005)
  - ລັດຖະບານໄດ້ຫ້າມການສົ່ງອອກໄມ້ທ່ອນ ແລະ ຫລຸດຜ່ອນການສົ່ງອອກໄມ້ເລື່ອຍ (ຄຳສັ່ງຂອງນາຍົກລັດຖະມຸນຕີ ເລກທີ: 11/1999, 10/2000 ແລະ 15/2001)
- **ອຸດສະຫະກຳປຸງແຕ່ງໄມ້:**
- ຄຳສັ່ງຂອງນາຍົກລັດຖະມຸນຕີ ເລກທີ: 10/2000 ແລະ ຄຳສັ່ງແນະນຳຂອງກະຊວງກະສິກຳ-ປ່າໄມ້ ເລກທີ: 267 /2000 ສັ່ງໃຫ້ຫລຸດຂະໜາດ ແລະ ຍົກລະດັບຂອງຂະແໜງອຸດສະຫະກຳໄມ້ລວມມີ:
  - ຜະລິດພະລິດຕະພັນເຄິ່ງສຳເລັດຮູບ ຫຼື ສຳເລັດຮູບ.
  - ນຳໃຊ້ເຕັກໂນໂລຢີສູງ ແລະ ກົນຈັກທີ່ມີກຳລັງການຜະລິດສູງເຊິ່ງແມ່ນເໝາະສົມສຳລັບການຜະລິດພະລິດຕະພັນເຄິ່ງສຳເລັດຮູບ ຫຼື ສຳເລັດຮູບ.
  - ສາທິດການປ້ອງກັນສິ່ງແວດລ້ອມ, ຄວາມປອດໄພ ແລະ ສະຫວັດດີການທີ່ດີເໜືອກວ່າ.
  - ດຳເນີນການດ້ວຍການຄຸ້ມຄອງບໍລິຫານທີ່ແທດເໝາະ.
  - ມີການບັນທຶກການປະຕິບັດຕາມກົດໝາຍໄດ້ດີ

- ຄຳສັ່ງຂອງນາຍົກລັດຖະມຸນຕີ ເລກທີ: 18/2002 ຮຽກຮ້ອງໃຫ້ປິດໂຮງເລື່ອຍ ແລະບໍລິສັດເຟີນີເຈີຈຳນວນໜຶ່ງ.
- ຄຳສັ່ງຂອງນາຍົກລັດຖະມຸນຕີ ເລກທີ: 18/2002 ແມ່ນມີຈຸດປະສົງເພື່ອສົ່ງເສີມການສົ່ງອອກຜະລິດຕະພັນເຄິ່ງສຳເລັດຮູບ ຫຼື ສຳເລັດຮູບ ແລະ ຫ້າມການສົ່ງອອກໄມ້ທ່ອນ.ນອກຈາກນັ້ນແລ້ວມີຄຳສັ່ງຂອງນາຍົກລັດຖະມຸນຕີ ເລກທີ: 25/2004 ອະນຸຍາດການສົ່ງອອກຜະລິດຕະພັນເຄິ່ງສຳເລັດຮູບຈຳນວນໜຶ່ງເທົ່ານັ້ນ.
- ດຳລັດຂອງນາຍົກລັດຖະມຸນຕີ ເລກທີ:46/2001 ຫ້າມການລົງທຶນຂອງຕ່າງປະເທດໂດຍບໍ່ມີການດຳເນີນຫຸ້ນສ່ວນຮ່ວມກັນເຂົ້າໃນອຸດສະຫະກຳປຸງແຕ່ງໄມ້ ປະເພດສອງເພື່ອປົກປ້ອງ ຜູ້ປະກອບການພາຍໃນປະເທດທີ່ຜະລິດຜະລິດຕະພັນເຄິ່ງສຳເລັດຮູບ ຫຼື ສຳເລັດຮູບ ແລະ ເພື່ອຫຼີກລ້ຽງຄວາມກົດດັນຕໍ່ກັບຊັບພະຍາກອນທຳມະຊາດ
- ດຳລັດຂອງນາຍົກລັດຖະມຸນຕີ ເລກທີ:300 ແລະ 301 ສົ່ງເສີມການປູກຕົ້ນໄມ້ເພື່ອຕອບສະໜອງໄມ້ທ່ອນໃນອານາຄົດ.
- ຄຳສັ່ງຂອງນາຍົກລັດຖະມຸນຕີ ເລກທີ: 18/2002 ຮຽກຮ້ອງໃຫ້ໂຮງງານປຸງແຕ່ງໄມ້ຈັດຕັ້ງການປູກຕົ້ນໄມ້ຂອງຕົນເອງ$

## ພາກທີ 2
## ຜົນກະທົບຕໍ່ສິ່ງແວດລ້ອມທີ່ຕິດພັນກັບການຄ້າ ແລະ ປະສົບການຕ່າງໆຂອງປະເທດໃນການປັບປຸງຄວາມຍືນຍົງດ້ານສິ່ງແວດລ້ອມໃນຂະແໜງການດັ່ງກ່າວນີ້.

### 2.1 ການວິເຄາະບັນດາຜົນກະທົບຂອງການຄ້າທີ່ເພີ້ມຂຶ້ນກ່ຽວກັບ ໄມ້ ແລະ ຜະລິດຕະພັນໄມ້ທີ່ປຸງແຕ່ງແລ້ວ

ບົດລາຍງານດັ່ງກ່າວນີ້ໄດ້ກຳນົດຈຳນວນໄມ້ ແລະ ຜະລິດຕະພັນໄມ້ທີ່ສຳຄັນເຊິ່ງ ສປປ ລາວ ຕອບສະໜອງໃຫ້ພາກພື້ນດັ່ງກ່າວນີ້. ຄືດັ່ງທີ່ໄດ້ເນັ້ນໃຫ້ເຫັນໃນບົດລາຍງານຫຼາຍສະບັບເຊັ່ນ: ບົດລາຍງານການພັດທະນາຊັບພະຍາກອນມະນຸດແຫ່ງຊາດ NHDR (CPI & UNDP 2006) ແລະ ການຕິດຕາມເສດຖະກິດຂອງທະນະຄານໂລກ (2006), ໃນຄະ ນະທີ່ການວັດແທກຕ່າງໆ ໄດ້ຖືກດຳເນີນການເພື່ອຮັບປະກັນວ່າມູນຄ່າຫຼວງຫຼາຍ ຈາກການສົ່ງອອກດັ່ງກ່າວນັ້ນແມ່ນ ຖືກຄວບຄຸມໃນປະເທດ, ແຕ່ມີຫຼາຍປະເດັນເຊັ່ນວ່າ: ການຕັດໄມ້ ແລະ ການສົ່ງອອກໄມ້ທ່ອນຜິດກົດໝາຍ (ເຮັດໃຫ້ການຕອບສະໜອງໄມ້ໃຫ້ແກ່ທຸລະກິດທ້ອງຖິ່ນຫລຸດລົງ) ແລະອຸດສະຫະກຳປຸງແຕ່ງໄມ້ທ້ອງຖິ່ນທີ່ບໍ່ໄດ້ຮັບການພັດທະນາ, ຂາດຊັບພະຍາກອນນັ້ນກຳລັງຂັດຂວາງຄວາມພະຍາຍາມດັ່ງກ່າວນີ້, ແລະ ການສ້າງບັນຫາທາງດ້ານສິ່ງແວດແລ້ວເຊັ່ນວາ: ການຊຸດໂຊມຂອງປ່າໄມ້, ການສູນເສຍຊີວະນາໆພັນ ແລະ ການສູນເສຍການບໍລິການແຫຼ່ງນ້ຳ.

ການນຳໃຊ້ຮູບແບບການຕີລາຄາປະເມີນຜົນການຄ້າ ແລະ ສິ່ງແວດລ້ອມແບບຮີບດ່ວນ, ເຄື່ອງມືອັນໜຶ່ງໄດ້ຖືກສ້າງຂຶ້ນສຳລັບການຕີລາຄາປະເມີນດັ່ງກ່າວນີ້ (ເບິ່ງຕາຕະລາງ 3.1) (IISD & IUCN 2006),ເອກະສານພາກນີ້ກວດຊອບເບິ່ງບັນດາຜົນກະທົບ ຕ່າງໆ ເຊິ່ງການຄ້າເສລີເຊັ່ນວ່າ: ການເປັນສາມະຊິກຂອງກຸ່ມອາຊຽນ, ເຂດການຄ້າເສລີຂອງກຸ່ມອາຊຽນ, ເຂດການຄ້າເສລີລະ ຫວ່າງກຸ່ມອາຊຽນກັບຈີນ, ຂໍ້ຕົກລົງການຄ້າສອງຝ່າຍ ສາມາດມີຕໍ່ກັບຂະແໜງການດັ່ງກ່າວນີ້, ແລະ ຕໍ່ກັບສິ່ງແວດລ້ອມ ທຳມະຊາດຂອງ ສປປ ລາວ.ສາມປະເພດແມ່ນໄດ້ຖືກນຳໃຊ້ເຂົ້າໃນການວິເຄາະຜົນກະທົບການຄ້າ ແລະ ສິ່ງແວດ ລ້ອມ, ລວມມີ:

- **ຜົນກະທົບດ້ານຂະໜາດ**: ການຄ້າອາດຈະນຳໄປສູ່ການເພີ້ມຂຶ້ນ ໃນດ້ານຂະຫຍາດການຜະລິດຂອງການປຸງແຕ່ງໄມ້ຈາກປ່າໄມ້ທຳມະຊາດ ແລະ ປ່າໄມ້ປູກເອົາເອງ;

- **ຜົນກະທົບດ້ານໂຄງສ້າງ**: ການຄ້າອາດຈະນໍາໄປສູ່ການປ່ຽນແປງໃນດ້ານຄວາມຕ້ອງການໄມ້ ແລະ ຜະລິດຕະພັນໄມ້ ແລະ ຜົນທີ່ຕາມມາກໍ່ຈະນໍາໄປສູ່ການປ່ຽນແປງ ທາງດ້ານໂຄງສ້າງຂອງຂະແໜງການດັ່ງກ່າວນີ້;
- **ຜົນກະທົບດ້ານເຕັກໂນໂລຢີ** (ຜົນກະທົບດ້ານຜະລິດຕະພັນ): ການຄ້າອາດຈະນໍາໄປສູ່ການເພີ່ມຂຶ້ນໃນການລົງທຶນໃໝ່ທີ່ນໍາເອົາເຕັກໂນໂລຢີໃໝ່ຕ່າງໆ ເຂົ້າໃນການປຸງແຕ່ງໄມ້ເຊິ່ງເຮັດໃຫ້ສະມັດຕະພາບ ຫຼື ປະສິດທິພາບຂອງຜົນຜະລິດຈາກການປຸງແຕ່ງໄມ້ໄດ້ເພີ້ມຂຶ້ນ. ແນ່ນອນມັນອາດຈະມີຜົນກະທົບໃນທາງກົງກັນຂ້າມ, ນໍາເອົາເຕັກໂນໂລຢີເກົ່າ ແລະ ຫຼ້າຫຼັງເຂົ້າມາ, ຂະບວນການຜະລິດໄດ້ຮັບຜົນໜ້ອຍ.

### 2.1.1 ຜົນກະທົບດ້ານຂະໜາດ: ການເພີ້ມຂຶ້ນຂອງຄວາມຕ້ອງການຜະລິດຕະພັນ ໄມ້ທີ່ປຸງແຕ່ງແລ້ວ ແລະ ບໍ່ທັນປຸງແຕ່ງໃນພາກພື້ນ

ການຄ້າເສລີອາດຈະນໍາໄປສູ່ການເພີ່ມຂຶ້ນ ໃນດ້ານຂະໜາດຂອງການຜະລິດໃນອຸດສະຫະກໍາປຸງແຕ່ງໄມ້ຂອງ ສປປ ລາວ.

ໃນລະດັບຂັ້ນພື້ນຖານທີ່ສຸດ, ຖ້າປັດສະຈາກການຄ້າແລ້ວ, ສປປ ລາວ ຈະພຽງແຕ່ຜະລິດຜະລິດຕະພັນໄມ້ພຽງພໍສໍາລັບການຊົມໃຊ້ພາຍໃນເທົ່ານັ້ນ, ໃນຄະນະທີ່ຢູ່ພາຍໃຕ້ສະພາບການຄ້າ, ປະເທດລາວຈຶ່ງໄດ້ເພີ້ມທະວີການຜະລິດຜະລິດຕະພັນໄມ້ເພື່ອສົ່ງອອກ, ແລະ ຜົນທີ່ຕາມມາໄດ້ເພີ້ມຂະໜາດຊື້ນສ່ວນຂອງປ່າໄມ້ເຂົ້າໃນເສດຖະກິດຂອງຊາດ. ໃນຄວາມເປັນຈິງແລ້ວ, ສປປ ລາວ ແມ່ນເໝາະສົມຫຼາຍທີ່ສຸດຢູ່ໃນສະພາບການຄ້າ, ແລະ ຄວາມຕ້ອງການໄມ້ໃນພາກພື້ນດັ່ງກ່າວນີ້ທີ່ກໍາລັງເພີ້ມຂຶ້ນນັ້ນ, ໂດຍສະເພາະແລ້ວແມ່ນປະເທດຈີນ, ມີທ່າແຮງບົ່ມຊ້ອນທີ່ຈະແຜ່ຂະຫຍາຍ ແລະ ເລັ່ງອັດຕາການເຊື່ອມໂຊມຂອງປ່າໄມ້ໃນປັດຈຸບັນນີ້ຢ່າງກວ້າງຂວາງ ແລະ ໄວ້ຂຶ້ນ.

ຄວາມເປັນຫ່ວງເປັນໄຍດ້ານສິ່ງແວດລ້ອມທີ່ຈະຕ້ອງໄດ້ຄົ້ນຄວ້າພິຈະລະນາພາຍໃຕ້ຜົນກະທົບດ້ານຂະໜາດນັ້ນມີຄື:

- ຄວາມກົດດັນທີ່ເພີ່ມຂຶ້ນຕໍ່ຊັບພະຍາກອນປ່າໄມ້ທໍາມະຊາດສະເພາະແມ່ນຊະນິດພັນໄມ້ທີ່ສໍາຄັນຈໍານວນໜຶ່ງຍ້ອນການຕັດໄມ້ທ່ອນເພີ່ມຂຶ້ນເພື່ອຕອບສະໜອງ ຕາມຄວາມຕ້ອງການໄມ້ແປຮູບເພື່ອການປຸງແຕ່ງ
- ການຫລຸດລົງທາງດ້ານຊີວະນາໆພັນ ແລະ ຄວາມກົດດັນຕໍ່ ກັບຊະນິດພັນໄມ້ສະເພາະ
- ປ່າໄມ້ເກົ່າແກ່/ດັ່ງເດີມມີການປ່ຽນເປັນປ່າປູກໄມ້ອຸດສະຫະກໍາເພື່ອສະໜອງໄມ້ອຸດສະຫະກໍາໃຫ້ແກ່ອຸດສະຫະກໍາປຸງແຕ່ງໄມ້ຢູ່ຕອນລຸ່ມຂອງສາຍນໍ້າ.

ປັດສະຈາກນະໂຍບາຍດ້ານສິ່ງແວດລ້ອມ ສໍາລັບການປູກຕົ້ນໄມ້ ແລະ ການປຸງແຕ່ງໄມ້ບໍ່ໄດ້ຖືກຈັດຕັ້ງປະຕິບັດຢ່າງແທດເໝາະແລ້ວ, ຂະໜາດທີ່ເພີ້ມຂຶ້ນພາຍໃນຂະແໜງການດັ່ງກ່າວນີ້ ສາມາດນໍາໄປສູ່ການຂຸດຄົ້ນຊັບພະຍາກອນທໍາມະຊາດໃຫ້ເລັ່ງໄວຂຶ້ນ, ບາງເທື່ອນໍາໄປສູ່ລະດັບແບບບໍ່ຍືນຍົງໄດ້.

ອີງຕາມການສໍາຫຼວດໂຮງເລື່ອຍ (MAF & NAFES 2005) ໃນສີ່ແຂວງ ພາກໃຕ້ເຊິ່ງເປັນບ່ອນທີ່ມີໂຮງງານ ປຸງແຕ່ງໄມ້ຂະ ໜາດໃຫຍ່ຕັ້ງຢູ່, ຊະນິດແນວພັນໄມ້ທີ່ຖືກນໍາໃຊ້ຫຼາຍກວ່າໝູ່ໝົດເຂົ້າ ໃນການປຸງແຕ່ງນັ້ນປະກອບມີພຽງແຕ່ 13 ຊະນິດເທົ່ານັ້ນໃນຈໍານວນ150 ຊະນິດແນວພັນໄມ້ທ່ອນ. ຖ້າຄວາມຕ້ອງ ການຊະນິດພັນໄມ້ອຸດສະຫະກໍາການຄ້າດັ່ງກ່າວນີ້ ສໍາລັບໂຮງງານປຸງແຕ່ງໄມ້ໃນທົ່ວປະເທດຍັງຄົງສູງຢູ່, ອົງປະກອບຂອງປ່າໄມ້ຈະ ຖືກບິດເບືອນ. ສິ່ງດັ່ງກ່າວນີ້ມີຜົນກະທົບບົ່ມຊ້ອນທັງດ້ານລົບ ແລະ ດ້ານບວກ. ໃນດ້ານບວກນັ້ນ, ບໍລິມາດທີ່ເພີ້ມຂຶ້ນໃນປັດຈຸບັນນີ້ບໍ່ແມ່ນຊະນິດພັນໄມ້ອຸດຫະກໍາທີ່ຕ້ອງການ ໃນທາງການຄ້າຈະມີພຽບພ້ອມໃຫ້ແກ່ບໍລິສັດຕ່າງໆ ເຊິ່ງສາມາດປັບປ່ຽນຂະບວນການປຸງແຕ່ງຂອງພວກເຂົາເຈົ້າ ແລະ ສາມາດສ້າງຄວາມຕ້ອງການຂອງຕະຫຼາດສໍາລັບ ຊະນິດພັນໄມ້ໃໝ່ທີ່ບໍ່ຄ່ອນຮູ້ກັນຫຼາຍປານໃດ. ອີກຢ່າງໜຶ່ງ, ສ່ວນອົງປະກອບຂອງປ່າໄມ້ທີ່ກໍາລັງປ່ຽນແປງໃນຫຼາຍໆ ແຫ່ງນັ້ນຈະສົ່ງຜົນໃຫ້ເກີດມີການຂົ່ມຄູ່ ແລະ ການປ່ຽນແປງຕ່າງໆໃນດ້ານໂຄງສ້າງ ແລະ ຊີວະນາໆພັນຂອງປ່າໄມ້ລາວ ແລະ ການສູນເສຍບ່ອນທີ່ຢູ່ອາໃສຂອງສັດປ່າ ແລະ ພືດພັນໄມ້.

- ຄວາມຕ້ອງກາດິນເພື່ອປູກຝັງ ແລະ ປູກຕົ້ນໄມ້ໄດ້ເພີ້ມຂຶ້ນນັ້ນໝາຍຄວາມວ່າຄວາມກົດດັນຕໍ່ການນໍາໃຊ້ທີ່ດິນ ແລະ ຂໍ້ຄັດແຍ່ງໄດ້ເພີ້ມຂຶ້ນໃນການປັບປ່ຽນປ່າໄມ້ທໍາມະຊາດ ແລະ ທີ່ດິນກະສິກໍາ. ບັນດາຜົນກະທົບທາງດ້ານສິ່ງ

ແວດລ້ອມ ຈາກການປູກຕົ້ນໄມ້ໃນວົງກວ້າງຂວາງນັ້ນ ນຳໄປສູ່ຜົນກະທົບຕ່າງໆ ຕໍ່ກັບການນຳໃຊ້ທີ່ດິນຂອງຂະແໜງການອື່ນໆ, ເຊັ່ນວ່າ: ທີ່ດິນຫວ່າງເປົ່າສຳລັບກະສິກຳ ແລະ ພືດຕ່າງໆທີ່ຄ້ຳປະກັນດ້ານສະບຽງອາຫານ. ສິ່ງດັ່ງກ່າວນີ້ຍັງສົ່ງຜົນໃຫ້ມີການປ່ຽນແປງຕໍ່ພຸມມີປະເທດ ແລະ ອົງປະກອບຂອງຊັບພະຍາກອນປ່າໄມ້. ຜົນກະທົບດັ່ງກ່າວນີ້ລວມມີດິນເຊາະເຈື່ອນ ແລະ ການຕົກຕະກອນຈາກການບຸກເບີກພື້ນທີ່ ອັນກວ້າງໃຫຍ່ໂດຍການຕັດໄມ້ທ່ອນແບບຟ້າວຟັ່ງ ແລະ ບໍ່ໄດ້ວາງແຜນ, ການປ່ຽນແປງຕ່າງໆໃນອົງປະກອບຊະນິດພືດພັນໄມ້ ແລະ ຂະໜາດໂຄງສ້າງ, ຫລຸດຜ່ອນການສະສົມຄວາມໜາແໜ້ນຂອງປ່າໄມ້, ແລະ ການຫລຸດຜ່ອນຂອງຈຳນວນ ປະຊາກອນສັດປ່າ ແລະ ພືດພັນໄມ້, ລວມທັງເຄື່ອງປ່າຂອງດົງ, ນຳໄປສູ່ການປ່ຽນແປງການປົກຄຸມຂອງປ່າໄມ້. ເມື່ອການປົກຄຸມຂອງປ່າໄມ້ ໄດ້ຖືກປ່ຽນແປງໂດຍສະເພາະປ່າໄມ້ເຂດຮ້ອນຊຸ່ມ, ດິນປ່າໄມ້ຢູ່ແຖບເນີນລາດສັນ ແມ່ນຂ້ອນຂ້າງຈະສ່ຽງຕໍ່ການເຊື່ອມໂຊມ.

ໃນຄະນະການປູກຕົ້ນໄມ້ ແລະ ການນຳໃຊ້ໄມ້ຂອງພວກເຂົາເຈົ້າ ເຂົ້າໃນການປຸງແຕ່ງໄມ້ທ້ອງຖິ່ນໄດ້ຖືກສົ່ງເສີມໂດຍນະໂຍບາຍຂອງລັດຖະບານ, ແຕ່ຄວາມເປັນຫ່ວງເປັນໄຍກ່ຽວກັບຜົນກະທົບທາງດ້ານສິ່ງແວດລ້ອມ ແລະ ສັງຄົມຂອງພວກເຂົາເຈົ້າແມ່ນກຳລັງປະກົດຂຶ້ນມາໃຫ້ເຫັນຢູ່. ໃນປັດຈຸບັນນີ້, ການຕອບສະໜອງຕໍ່ກັບປະເດັນເຫຼົ່ານີ້, ນາຍົກລັດຖະມຸນຕີໄດ້ປະກາດແຈ້ງການ ໂຈະການສຳປະທານທີ່ດິນຈົນກວ່ານະໂຍບາຍ ໃນຂົງເຂດວຽກງານດັ່ງກ່າວນີ້ ສາມາດຖືກເສີມສ້າງໃຫ້ເຂັ້ມໄດ້.ດຽວນີ້ລັດຖະບານມີຊ່ອງທາງກາລະໂອກາດ ເພື່ອຄົ້ນຄວ້າຊອກບັນດາທາງເລືອກໃໝ່ ດ້ານນະໂຍບາຍທີ່ຈະຄວບຄຸມດູແລ ແລະ ກະຕຸກຊຸກຍູ້ການວາງແຜນນຳໃຊ້ທີ່ດິນ ແລະ ການປູກຕົ້ນໄມ້ໃຫ້ເໝາະສົມ.

ອີກຢ່າງໜຶ່ງຕໍ່ກັບນະໂຍບາຍການປູກຕົ້ນໄມ້ຂອງລັດຖະບານ, ເພື່ອຮັບປະກັນຊັບພະຍາກອນໃຫ້ຍືນຍົງໃຫ້ແກ່ຂະແໜງການໄມ້ ແລະ ຜະລິດຕະພັນໄມ້ ມັນຍັງເປັນສິ່ງສຳຄັນຫຼາຍວ່າປ່າໄມ້ທີ່ມີຢູ່ແລ້ວນັ້ນຈະຕ້ອງໄດ້ຮັບການຄຸ້ມຄອງໃຫ້ດີຂຶ້ນກວ່າເກົ່າ. ໃນປັດຈຸບັນນີ້ມີປ່າຜະລິດ (PFAs) 59 ແຫ່ງໃນ ສປປລາວ ດ້ວຍເນື້ອທີ່ລວມທັງໝົດ 3.6 ລ້ານເຮັກຕາ, ໃນນັ້ນມີປ່າຜະລິດ 8ແຫ່ງໄດ້ຖືກສ້າງຕັ້ງຂຶ້ນຢ່າງເປັນທາງການ ແລະ ມີແຜນການຄຸ້ມຄອງບໍລິຫານຈັດການ, ປ່າຜະລິດອີກ 29 ແຫ່ງໄດ້ຖືກຕົກລົງເຫັນດີໂດຍເຈົ້າແຂວງ ແລະ ດຽວນີ້ແມ່ນຢູ່ພາຍໃຕ້ການຄົ້ນຄວ້າພິຈາລະນາຂອງລັດຖະບານ, ແລະສ່ວນທີ່ຍັງເຫຼືອນັ້ນແມ່ນກຳລັງຖືກສຶກສາຄົ້ນຄວ້າຢູ່ໃນປັດຈຸບັນນີ້. ຖ້າປັດສະຈາກພື້ນຖານຄວາມລະອຽດຈະແຈ້ງຕາມກົດໝາຍໃນດ້ານຂອບເຂດທີ່ຕັ້ງ ແລະ ການວາງແຜນຄຸ້ມຄອງບໍຫານຈັດການແລ້ວ, ປ່າໄມ້ເຫຼົ່ານີ້ແມ່ນມີຄວາມສ່ຽງໃນການຂຸດຄົ້ນຫຼາຍເກີນໄປໂພດ ແລະ ການຊຸດໂຊມທາງດ້ານສິ່ງແວດລ້ອມ.

### 2.1.2. ຜົນກະທົບດ້ານໂຄງສ້າງ : ການປ່ຽນແປງຈາກການສົ່ງອອກ ທີ່ມີມູນຄ່າຕ່ຳມາເປັນການສົ່ງອອກທີ່ມີມູນຄ່າສູງ

ແມ່ນການຄ້າທີ່ເຮັດໃຫ້ເກີດມີການປ່ຽນແປງໃນຄວາມຕ້ອງການຜະລິດຕະພັນ ແລະ ສະນັ້ນເພື່ອຕອບສະໜອງຕາມຄວາມຕ້ອງການດັ່ງກ່າວ, ໂຄງສ້າງຂອງຂະແໜງການໜຶ່ງ ອາດຈະເປັນຜົນກະທົບທີ່ໜ້າສົນໃຈທີ່ສຸດໃນການດຳເນີນການກວດກາໃນຂະແໜງການໄມ້ ແລະ ຜະລິດຕະພັນໄມ້. ປະຈຸບັນ, ສປປ ລາວ ກຳລັງປະເຊີນໜ້າກັບຜົນກະທົບດ້ານລົບຫລາຍຢ່າງທີ່ເກີດຈາກການຄ້າທີ່ບໍ່ຖືກຕ້ອງຕາມກົດ ໝາຍ ແລະ ການສົ່ງອອກຜະລິດຕະພັນທີ່ມີມູນຄ່າຕ່ຳ- ການບົກແຫ້ງຂອງປ່າໄມ້ ແລະ ຜົນພອຍໄດ້ໃນດ້ານເສດຖະກິດຕ່ຳ. ບັນຫາກໍ່ຄືຫລາຍປະເທດຍັງມີຄວາມຕ້ອງການໄມ້ທີ່ຍັງບໍ່ທັນໄດ້ແປຮູບຢ່າງຫລວງຫລາຍເພື່ອນຳໄປແປຮູບເປັນຜະລິດຕະພັນໄມ້ທີ່ມີມູນຄ່າສູງກວ່າສຳລັບການຊົມໃຊ້ພາຍໃນຂອງເຂົາເຈົ້າ ແລະ ເພື່ອສົ່ງອອກ ( CPI & UNDP 2006 ). ເຖິງວ່າບັນຫາດັ່ງກ່າວນີ້ຖືກການຮັບຮູ້ຈາກລັດຖະບານ ແລະ ບໍລິສັດຕ່າງໆທີ່ນຳໜ້າໃນຂະແໜງການນີ້ກໍ່ຕາມ, ແຕ່ ສປປ ລາວ ຍັງບໍ່ທັນໄດ້ສ້າງຜະລິດຕະພັນທີ່ມີມູນຄ່າສູງຢ່າງກວ້າງຂວາງ.

ສິ່ງທີ່ມີຄວາມເປັນໄປໄດ້ຢ່າງໜຶ່ງໃນລະຫວ່າງການປຶກສາຫາລືນັ້ນກໍ່ແມ່ນ ສປປ ລາວ ໃຫ້ຄຳໝັ້ນສັນຍາວ່າຂໍ້ຕົກລົງການຄ້ານັ້ນຈະຈັດຕັ້ງປະຕິບັດນະໂຍບາຍຂອງລັດຖະບານກ່ຽວກັບໄມ້ ແລະ ຜະລິດຕະພັນໄມ້. ສິ່ງດັ່ງກ່າວນີ້ຈະເອື້ອອຳນວຍໃຫ້ແກ່ການປັບປຸງສະພາບການຄ້າທີ່ຈຳເປັນສຳລັບຂະແໜງການນີ້ໃນການສົ່ງເສີມການຜະລິດພາຍໃນ ແລະ ການສົ່ງອອກຜະລິດຕະພັນໄມ້ທີ່ມີມູນຄ່າສູງ, ຜົນປະໂຫຍດໃນຕອນເລີ້ມຕົ້ນປະກອບດ້ວຍ:

- ຫລຸດຜ່ອນອຸປະສັກໃນການນຳເຂົ້າທີ່ມີຕໍ່ຕະຫລາດຕ່າງປະເທດ (ຕົວຢ່າງ: ການເຮັດໃຫ້ພາສີຂາເຂົ້າ-ອອກຕ່ຳລົງ ພາຍໃຕ້ ASEAN);
- ອຳນວຍຄວາມສະດວກໃຫ້ແກ່ຂະບວນການເກັບອາກອນທີ່ຄ່ອງຕົວ (fluid custom processes) (ຕົວຢ່າງ: ຂໍ້ຕົກລົງກວດກາພາສີ-ອາກອນຢູ່ຈຸດດຽວສະຫວ່າງລາວ/ ຫວຽດນາມ);
- ດຶງດູດການລົງທຶນຂອງຕ່າງປະເທດໄດ້ຫລາຍຂື້ນ (ຂໍ້ຕົກລົງກ່ຽວກັບການລົງທຶນຂອງ ASEAN)
- ການກໍ່ສ້າງເສັ້ນທາງຄົມມະນາຄົມທີ່ດີກວ່າ, ຄຸ້ມຄ່າໃນການລົງທຶນຫລາຍກວ່າ (ເຂດເຊື່ອມຕໍ່ເສດຖະກິດໃນເຂດອານຸພາກພື້ນຂອງແມ່ນນ້ຳຂອງ/ ແລະ ຂໍ້ຕົກລົງກ່ຽວກັບຂົວມິດຕະພາບລາວ/ໄທ)

ເຖິງວ່າການຄ້າເຮັດໃຫ້ຜະລິດຕະພັນໄມ້ ທີ່ມີຜະລິດຕະພາບສູງມີການຂະຫຍາຍຕົວນັ້ນມີຄວາມເປັນໄປໄດ້ທີ່ຈະເຮັດໃຫ້ ມີຜົນກະທົບໃນດ້ານລົບຕໍ່ສິ່ງແວດລ້ອມເນື່ອງຈາກວ່າຂະໜາດມີການເພີ້ມຂື້ນກໍ່ຕາມ (ເບິ່ງຂ້າງເທິງ), ແຕ່ມັນກໍ່ເຮັດໃຫ້ເກີດມີຜົນກະທົບໃນດ້ານບວກຫລາຍຢ່າງ. ຖ້າວ່າຊັບພະຍາກອນໄມ້, ເຊິ່ງປະຈຸບັນຖືກສົ່ງອອກໂດຍມີມູນຄ່າຕ່ຳ ( ຕົວຢ່າງ: ໄມ້ເລື່ອຍ) ໄປປະເທດຫວຽດນາມ, ໄທ, ຈີນ ແລະ ຍີ່ປຸ່ນຖືກນຳເຂົ້າມາໃນອຸສາຫະ ກຳປຸງແຕ່ງໄມ້ພາຍໃນ, ອາດຈະບໍ່ເຮັດໃຫ້ມີພາລະເພີ້ມເຕີມສຳລັບຊັບພະຍາກອນປ່າໄມ້ຂອງຊາດ. ຄວາມຈິງແລ້ວ, ພາຍໃຕ້ສະພາບການດັ່ງກ່າວນີ້, ຊັບພະຍາກອນປ່າໄມ້ອາດຈະໄດ້ຮັບປະໂຫຍດ, ເນື່ອງຈາກວ່າອຸດສະຫະກຳພາຍໃນກາຍເປັນສິ່ງທີ່ເພິ່ງພາຊັບພະຍາກອນໄມ້ ແລະ ມີແນວໂນ້ມທີ່ຈະປະກອບສ່ວນໃນຄວາມພະຍາຍາມ ເພື່ອຢຸດຕິການຕັດໄມ້ ຫລື ການຄ້າທີ່ບໍ່ຖືກຕ້ອງຕາມກົດໝາຍ. ພາຍໃຕ້ສະພາບດັ່ງກ່າວນີ້ລາຍຮັບຂອງລັດ ຖະບານຈາກຂະແໜງການດັ່ງກ່າວນີ້ຈະເພີ້ມສູງຂື້ນ ແລະ ຈະກັບມາປະກອບສ່ວນໃຫ້ແກ່ນະໂຍບາຍ ແລະ ແຜນງານຕ່າງໆເຊັ່ນ: ແຜນການຄຸ້ມຄອງປ່າໄມ້ແບບຍືນຍົງ ແລະ ຂໍ້ຕົກລົງກ່ຽວກັບການຄຸ້ມຄອງປ່າໄມ້ຮ່ວມກັບ ອຸດສາຫະກຳທີ່ຮັບປະກັນໃຫ້ຊັບພະຍາກອນມີຄວາມຍືນຍົງ.

### 2.1.3 ຜົນກະທົບດ້ານເທກໂນໂລກຢີ: ຜົນໄດ້ ແລະ ຜົນເສຍຈາກການ ລົງທຶນໂດຍກົງຂອງຕ່າງປະເທດ

ຜົນກະທົບສຸດທ້າຍ ຈາກການຄ້າທີ່ມີຕໍ່ສິ່ງແວດລ້ອມ ທີ່ເອກະສານສະບັບນີ້ຍົກຂື້ນມາພິຈາລະນາ ແມ່ນຜົນກະທົບຈາກເທັກ ໂນໂລຊີ. ມີຄວາມເປັນໄປໄດ້ທີ່ການຫັນເປັນເສລີການຄ້າຈະນຳມາຊຶ່ງການລົງທຶນ ແລະ ເຕັກໂນໂລຊີຈາກຕ່າງປະເທດ. ຕົວຢ່າງ: ປະຈຸບັນ ສປປ ລາວ ແມ່ນສະມາຊິກຂອງ ASEAN ແລະ ພາຍໃຕ້ສະມາຄົມດັ່ງ ກ່າວນີ້ ສປປ ລາວ ໄດ້ຮັບການສະໜັບສະໜູນໂດຍຜ່ານເວທີ ແລະ ຂໍ້ຕົກລົງຕ່າງໆໃນພາກພື້ນເຊັ່ນຂໍ້ຕົກລົງກ່ຽວກັບການລົງທຶນຂອງ ASEAN ແລະ ຂໍ້ລິເລີ້ມຕ່າງໆທີ່ພາກເອກະຊົນເປັນຜູ້ນຳໜ້າເຊັ່ນສະພາການຄ້າຂອງ ASEAN ເພື່ອສ້າງຄວາມເຂັ້ມແຂງໃຫ້ແກ່ບັນຍາດຂອງການລົງທຶນ ແລະ ການຄ້າແຫ່ງຊາດ. ເນື່ອງຈາກວ່າການເຊື່ອມໂຍງເຂົ້າກັບ ASEAN ມີທ່ວງທ່າກ້າວໄປຂ້າງໜ້າ ແລະ ຂໍ້ຕົກລົງຫລາຍຢ່າງກໍ່ໄດ້ຮັບການລົງນາມ, ສະ ນັ້ນຈຶ່ງມີການຄາດຄະເນວ່າການລົງທຶນຢູ່ໃນຂົງເຂດພາກພື້ນຈະເພີ້ມສູງຂື້ນ.

ການລົງທຶນ ແລະ ເທັກໂນໂລຊີໃໝ່ສາມາດສົ່ງຜົນກະທົບທັງໃນດ້ານບວກ ແລະ ດ້ານລົບຕໍ່ສິ່ງແວດລ້ອມ. ໃນດ້ານບວກ, ສປປ ລາວ ອາດຈະສາດມາດດຶງດູດນັກລົງທຶນ ທີ່ນຳເອົາເຕັກໂນໂລຊີທີ່ສາມາດຍົກສູງຜົນຜະລິດ ຫລື ປະສິດທິພາບຂອງຜະລິດຕະພັນໄມ້ແປຮູບ (ໃນດ້ານຄຸນນະພາບ) , ແລະ ໃນທາງກົງກັນຂ້າມມັນຈະເຮັດໃຫ້ຄວາມຕ້ອງການວັດຖຸດິບຈາກປ່າໄມ້ທຳມະຊາດຫລຸດລົງ. ນອກຈາກນີ້ມັນຍັງອາດຈະເປັນການດຶງດູດ ເອົາບັນດາບໍລິສັດທີ່ມີການຄຸ້ມຄອງ-ບໍລິຫານທີ່ມີມາດຕະຖານສູງເຊັ່ນ:ນະໂຍບາຍຮ່ວງໂສ້ໃນການສະໜອງ (supply chain policies) ທີ່ເອົາໃຈໃສ່ຕໍ່ຄວາມເປັນຫວ່ງກັງວົນຕ່າງໆໃນດ້ານສິ່ງແວດລ້ອມ (ຕົວຢ່າງ: ຄວາມຕ້ອງການໄມ້ທີ່ຂຸດຄົ້ນມາຈາກປ່າໄມ້ທີ່ມີການຄຸ້ມຄອງຢ່າງມີຄວາມຍືນຍົງ ຫລື ຜ່ານຂະບວນການຢັ້ງຢືນໄມ້). ຢ່າງໃດກໍ່ຕາມ, ໃນຄະນະດຽວກັນ, ການລົງທຶນໂດຍກົງຂອງຕ່າງປະເທດ (FDI) ສາມາດດຶງດູດບັນດາບໍລິສັດທີ່ຊອກຫາຜົນປະໂຫຍດ ຈາກສະພາບນະໂຍບາຍທີ່ມີມາດຕະຖານຕ່ຳ ຫລື ບໍ່ເຂັ້ມແຂງ ແລະ ເອື້ອອຳນວຍໃຫ້ເຂົາເຈົ້ານຳໃຊ້ເທັກໂນໂລຊີທີ່ມີລາຄາຖືກ, ຫລ້າສະໄໝ ແລະ ບໍ່ເປັນມິດກັບສິ່ງແວດລ້ອມ ແລະ ດຳເນີນການປະກອບການໃນຮູບແບບ ທີ່ປະເທດຂອງເຂົາເຈົ້າບໍ່ອະນຸຍາດໃຫ້ເຮັດ.

ສ່ວນໃຫຍ່ແລ້ວນະໂຍບາຍ ການພັດທະນາທີ່ມີປະສິດທະພາບ ເພື່ອສົ່ງເສີມການລົງທຶນທີ່ມີຜົນໃນດ້ານບວກແມ່ນມີຄວາມສະຫລັບຊັບຊ້ອນ. ລັດຖະບານກຳລັງສຸມຄວາມພະຍາຍາມເພື່ອປັບປຸງຂະແໜງການປຸງແຕ່ງໄມ້. ບັນດາໂຮງງານທີ່ສ້າງມູນຄ່າເພີ້ມຕ່ຳ ແລະ ມີປະສິດທິພາບຕ່ຳຖືກສັ່ງໃຫ້ປິດ ຫລື ລວມຕົວເພື່ອໃຫ້ກາຍເປັນວິສາຫະກິດທີ່ມີຄວາມສາມາດໃນການແຂ່ງຂັນສູງກວ່າເກົ່າ (*Vientiane Times* 2007) ແລະ ໂຮງງານຫລາຍແຫ່ງ ຖືກສະເໜີໃຫ້ຮັບເອົາເທັກໂນໂລຊີທີ່ດີກວ່າເຂົ້າມານຳໃຊ້ ເພື່ອປັບປຸງການສ້າງມູນຄ່າເພີ້ມໃນການປະກອບການຂອງຕົນໃຫ້ດີຂື້ນ. ການດັດສົມດັ່ງກ່າວ ຮຽກຮ້ອງໃຫ້ມີການລົງທຶນ ແລະ ຂະນະດຽວກັນລັດຖະບານກໍ່ກຳລັງສົ່ງເສີມການລົງທຶນຂອງຕ່າງ ປະເທດໃນຂະແໜງການປຸງແຕ່ງໄມ້, ຂະນະດຽວກັນລັດຖະບານກໍ່ກຳລັງຊອກຫາວິທີການ ສົ່ງເສີມອຸດສາຫະກຳຂອງລາວໂດຍຜ່ານກົດ ໝາຍວ່າດ້ວຍການສົ່ງເສີມການລົງທຶນຕ່າງປະເທດ ແລະ ຮັບປະກັນໃຫ້ປ່າໄມ້ທຳມະຊາດຂອງ ສປປ ລາວ ມີຄວາມຍືນຍົງ, ໂດຍການຈຳກັດການລົງທຶນຂອງຕ່າງປະເທດຕະຫລອດຮອດວິສາຫະ ກິດທີ່ມີລາຍຮັບຈາກປ່າປູກ.

## 2.2 ກໍລະນີສຶກສາກ່ຽວກັບຂະແໜງການໄມ້ ແລະ ຜະລິດຕະພັນ ໄມ້ແປຮູບ: ປ່າໄມ້ທີ່ໄດ້ຮັບການຢັ້ງຢືນ ໃນ ສປປ ລາວ.

ນອກຈາກນັ້ນ ການຄ້າຍັງໄດ້ສ້າງກາລະໂອກາດໃຫ້ແກ່ ສ ປປ ລາວ ເພື່ອປັບປຸງຄວາມຍືນຍົງຂອງປ່າໄມ້ ແລະ ຂະແໜງການໄມ້ ແລະ ຜະລິດຕະພັນໄມ້ ໂດຍຜ່ານການຕອບສະໜອງຕາມຄວາມຕ້ອງການຂອງຕະຫລາດຕ່າງປະເທດ. ປະຈຸບັນມີຫລາຍໆບໍລິສັດໃນທົ່ວໂລກ ຫັນມາເອົາໃຈໃສ່ຕໍ່ການສະໜັບສະໜູນປ່າໄມ້ທີ່ມີຄວາມຮັບຜິດຊອບນັບມື້ນັບຫລາຍຂື້ນເລື້ອຍໆ. IKEA , ບໍລິສັດລະຫວ່າງຊາດທີ່ຍັກໃຫຍ່ຂອງສະວີເດັນ, ແມ່ນໜຶ່ງໃນບໍລິສັດເຫລົ່ານັ້ນ. ໂດຍອີງຕາມນະໂຍບາຍການຊື້ຂອງເຂົາເຈົ້າ, ບໍລິສັດເຫລົ່ານັ້ນຊອກຊື້ໄມ້ ແລະ ເຄື່ອງເຟີນີເຈີ້ ທີ່ສາມາດໄດ້ຮັບການຢັ້ງຢືນວ່າເປັນໄມ້ ແລະ ເຄື່ອງເຟີນີເຈີ້ທີ່ໄດ້ມາຈາກແຫລ່ງທີ່ມີທີ່ມີຄວາມຍືນຍົງ (IKEA 2007 ).

ການຜະລິດໄມ້ທີ່ມີຄວາມຍືນຍົງ ແມ່ນຈຸດປະສົງທີ່ສຳຄັນທີ່ໄດ້ກຳນົດໄວ້ ໃນນະໂຍບາຍຂອງລັດຖະບານມາແຕ່ປີ 1975 ເປັນຕົ້ນມາ ແລະ ກະຊວງກະສິກຳ-ປ່າໄມ້ໄດ້ເອົາບາດກ້າວທີ່ສຳຄັນຫລາຍໆຢ່າງ ເພື່ອເຮັດໃຫ້ປ່າໄມ້ສ່ວນທີ່ຍັງເຫລືອ ໃນປະເທດໄດ້ຮັບການຄຸ້ມຄອງຢ່າງມີຄວາມຍືນຍົງ. ໃນໄລຍະໄວໆມານີ້, ລັດຖະບານໄດ້ເລີ້ມກະກຽມ ການຢັ້ງຢື້ນການຄຸ້ມຄອງປ່າໄມ້ໂດຍຜ່ານອົງການອອກການຢັ້ງຢືນພາຍໃນ ຫລື ຕ່າງປະເທດ ທີ່ມີການດຳເນີນງານພາຍໄຕ້ເງື່ອນໄຂມາດຖານ ທີ່ຜ່ານການຮັບຮອງໃນລະດັບສາກົນ.

ສະນັ້ນ, ເງື່ອນໄຂມາດຖານ ແລະ ດັດສະນີຊີ້ວັດ (C&I) ສຳລັບການຄຸ້ມຄອງປ່າໄມ້ແບບຍືນຍົງຈື່ງຖືກພັດທະນາຂື້ນໃນປີ 1999-2000 ໂດຍຜ່ານໂຄງການໜຶ່ງ ທີ່ມີກຳນົດໜຶ່ງປີທີ່ເປັນໂຄງການທົດລອງການຢັ້ງຢືນປ່າໄມ້ພາຍໄຕ້ສະພາປົກປ້ອງປ່າໄມ້ ( Forest Stewardship Council (FSC)), ເຊິ່ງເປັນອົງການອອກການຢັ້ງຢືນສາກົນໜຶ່ງ, ສຳເລັດແລ້ວຢູ່ໃນແຂວງສະຫັວນນະເຂດ ແລະ ແຂວງຄຳມ່ວນ. ໃນປີ 2003, ປ່າໄມ້ແຫ່ງຊາດໃນສອງແຂວງດັ່ງກ່າວນີ້ເຊິ່ງ ກວມເນື້ອທີ່ປະມານ 50.000 ເຮັກຕາໄດ້ຮັບການຢັ້ງຢືນ FSC ໂດຍ Smartwood, ອົງການອອກການຢັ້ງຢືນແຫ່ງໜຶ່ງທີ່ມີຄວາມເຊື່ອຖືໄດ້ ແລະ ເປັນແຜນງານໜຶ່ງຂອງ Rainforest Alliance Tropical Forest Trust (TFT). ປະຈຸບັນລັດຖະບານ ກຳລັງສ້າງແຜນເພື່ອນຳໃຊ້ບົດຮຽນເຫລົ່ານີ້ ໃນການຄຸ້ມຄອງປ່າຜະລິດຕ່າງໆ ໃນຂອບເຂດທົ່ວປະເທດ. ປ່າໄມ້ທີ່ຜ່ານການຢັ້ງຢືນແລ້ວນັ້ນຖືກຄຸ້ມຄອງ ແລະ ບໍລິຫານຮ່ວມກັນໂດຍກຸ່ມຄຸ້ມຄອງປ່າໄມ້ແບບຍືນຍົງ ( SFMG) ໃນຂັ້ນແຂວງ ແລະ ຂັ້ນເມືອງໂດຍນຳໃຊ້ຕົວແບບປ່າໄມ້ບ້ານເປັນພື້ນຖານໃນການຄຸ້ມຄອງປ່າໄມ້, ຊາວບ້ານໄດ້ຮັບສິດທິໄລຍະຍາວ ໃນການນຳໃຊ້ປ່າໄມ້ພາຍໄຕ້ເງື່ອນໄຂທີ່ວ່າເຂົາເຈົ້າຕ້ອງສ້າງແຜນການຄຸ້ມຄອງຮ່ວມກັບອົງການປົກຄອງທ້ອງຖິ່ນ ແລະ ຈັດຕັ້ງປະຕິບັດແຜນນັ້ນຢ່າງເໝາະສົມ.

ການຢັ້ງຢືນແມ່ນໃຊ້ເພື່ອຮັບປະກັວ່າ ຜະລິດຕະພັນໄມ້ແມ່ນ ໄດ້ມາຈາກປ່າໄມ້ທີ່ໄດ້ຮັບການຄຸ້ມຄອງຢ່າງຍືນຍົງທີ່ປະກອບດ້ວຍແຜນການຄຸ້ມຄອງ ແລະ ໂຄງສ້າງການຈັດຕັ້ງປະຕິບັດທີ່ມີປະສິດທິພາບທີ່ເຖິງວ່າມັນຍັງເປັນບັນຫາໃຫມ່ ແລະ ເປັນການພັດທະນາແນວຄວາມຄິດຢູ່ກໍ່ຕາມ,ແຕ່ມັນກໍ່ເຮັດໃຫ້ມີທາງເລືອກໃຫມ່ເພື່ອຮັບປະກັນໃຫ້ຊັບພະຍາກອນປ່າໄມ້ຂອງຊາດໄດ້ຮັບການຄຸ້ມຄອງຢ່າງຍືນຍົງ. ນອກນັ້ນ, ມັນຍັງເປັນການສ້າງໂອ ກາດທີ່ດີໃຫ້ແກ່ບັນດາໂຮງງານ

ຜະລິດໄມ້ໃນທ້ອງຖິ່ນໃຫ້ມີແຫລ່ງໄມ້ເພື່ອມາແປຮູບ ເປັນຜະລິດຕະພັນໄມ້ທີ່ມີມູນຄ່າສູງໃນຕະຫລາດສາກົນ.

ຢ່າງໃດກໍ່ຕາມ, ສິ່ງທີ່ກ່າວມາທັງໝົດນີ້ ອາດຈະບໍ່ເກີດຂື້ນເວັ້ນເສຍແຕ່ວ່າ ອຸດສາຫະກຳປຸງແຕ່ງໄມ້ປະຕິບັດໃຫ້ໄດ້ຕາມເງື່ອນໄຂ ຈຳເປັນຂອງຕະຫລາດ, ແລະ ເລີ້ມສ້າງລະບົບຮ່ອງໂສ້ກຳມະສິດໃນການຄຸ້ມຄອງ (Chain-of- Custody) ຂອງຕົນຂື້ນ. ສ່ວນໃຫຍ່ຂອງເນື້ອທີ່ປ່າຜະລິດທຳມະຊາດ ແມ່ນຢູ່ພາຍໄຕ້ການຄຸ້ມຄອງປ່າໄມ້ແບບຍືນຍົງແລ້ວ, ແລະເນື້ອທີ່ປ່າໄມ້ສ່ວນຫລາຍກໍ່ໄດ້ຮັບການຢັ້ງຢືນພາຍໄຕ້ໂຄງການອອກການຢັ້ງຢືນຂອງສະພາປົກປ້ອງປ່າໄມ້(FSC)ແລ້ວ. ປະຈຸບັນໄມ້ (ໄມ້ທ່ອນ) ຈາກເນື້ອທີ່ເຫລົ່ານີ້ ສາມາດນຳໄປຈຳໜ່າຍໄດ້ ໃນແຕ່ລະຕະຫລາດສົ່ງອອກສະເພາະໄມ້ທີ່ຜ່ານການຢັ້ງຢືນເທົ່ານັ້ນ ເນື່ອງຈາກວ່າບໍ່ມີວິສາຫະກິດອຸດສາຫະກຳໄມ້ໃດໆໃນ ສປປ ລາວ ມີການຢັ້ງຢືນກ່ຽວກັບຮ່ອງໂສ້ກຳມະສິດໃນການຄຸ້ມຄອງ (Chain-of- Custody verification). ປະຈຸບັນມີວິສາຫະກິດຈຳນວນໜ້ອຍໜຶ່ງເທົ່ານັ້ນທີ່ຄວາມມີຮູ້ເລື້ອງ ຮ່ອງໂສ້ກຳມະສິດໃນການຄຸ້ມຄອງ (CoC) ແລະ ການຢັ້ງຢືນ. ຫລາຍຄົນເຊື່ອວ່າ ສປປ ລາວ ມີທ່າແຮງທີ່ຈະກາຍເປັນຜູ້ສະໜອງຜະລິດຕະພັນໄມ້ທີ່ຜ່ານການຢັ້ງຢືນລາຍໃຫຍ່ທີ່ສຸດໃນ ອາຊີຕາເວັນອອກ, ແຕ່ຢ່າງໃດກໍ່ຕາມ, ຖ້າອຸດສາຫະກຳໄມ້ບໍ່ສ້າງລະບົບ CoC ຂອງຕົນຂື້ນໃນໄລຍະໄວໆນີ້, ໂອກາດສຳຄັນໃນການຄຸ້ມຄອງປ່າໄມ້ຈະສູນເສຍໄປລ້າໆ. ລະບົບ CoC ທີ່ໄດ້ ຮັບການຮັບຮອງ, ຖ້າໄດ້ຮັບການອອກແບບຢ່າງເໝາະສົມ, ສາມາດປະກອບສ່ວນເຂົ້າໃນການປົກປັກຮັກສາສິ່ງແວດລ້ອມ, ແລະ ເປັນຕົວຍູ້ແຮງການຫລຸດຜ່ອນການຄຸດຄົ້ນໄມ້ ທີ່ບໍ່ໄດ້ຮັບອະນຸຍາດ ແລະ ການຄ້າໄມ້ທີ່ບໍ່ຖືກຕ້ອງຕາມກົດໝາຍ.

ສິ່ງສຳຄັນທີ່ສຸດ ທີ່ຈະຕ້ອງໄດ້ເອົາໃຈໃສ່ສຳລັບຂະແໜງການໄມ້ ແລະ ຜະລິດຕະພັນໄມ້ຂອງ ສປປ ລາວ ແມ່ນມີຄວາມຕ້ອງການໄມ້ ທີ່ຜ່ານການຢັ້ງຢືນວ່າ ມີຄວາມຍືນຍົງທີ່ກຳລັງກ້າວຜ່ານ ສິ່ງທີ່ສາມາດຈັດປະເພດໃຫ້ເປັນ " ຍຸດທະສາດສະເພາະ niche " ກ່ຽວກັບຕະຫລາດສາກົນ ແລະ ໃນໄວໆນີ້ອາດຈະກາຍເປັນຊ່ອງທາງດຽວທີ່ຜະລິຕະພັນໄມ້ຈະຖືກຍອມ ຮັບຢູ່ໃນຫລາຍໆປະເທດ.

## ໝວດ 3:
## ຂໍ້ສະຫລຸບ ແລະ ຂໍ້ສະເໜີແນະຕ່າງໆໃນດ້ານນະໂຍບາຍ ທີ່ເປັນຍຸດທະສາດສຳລັບຂະແໜງການໄມ້ ແລະ ປຸງແຕ່ງໄມ້.

### 3.1 ສະຫລຸບ

ເນື່ອງມາຈາກຈັດຕັ້ງປະຕິບັດກົນໄກເສດຖະກິດໃໝ່ ມາຕັ້ງແຕ່ປີ 1986 ການແບ່ງຂັ້ນຄຸ້ມຄອງໄດ້ເຂົ້າມາແທນທີ່ ຂະບວນການວາງແຜນເສດຖະກິດແບບດັ້ງເດີມ ແລະ ສປປ ລາວໄດ້ກ້າວໄປສູ່ເສດຖະກິດການຕະຫລາດທີ່ມີການເປີດກ້ວາງ. ໃນໄລຍະເວລາດັ່ງກ່າວ, ລັດຖະບານແຫ່ງ ສປປ ລາວ ໄດ້ກຳນົດເປົ້າໝາຍຂອງຕົນຂື້ນເພື່ອລົບລ້າງຄວາມທຸກຍາກ ແລະ ເພື່ອນຳພາປະເທດຊາດໃຫ້ຫລຸດພົ້ນອອກຈາກສະຖານະພາບຂອງປະເທດທີ່ດ້ອຍພັດທະນາທີ່ສຸດກ່ອນປີ 2020 (GoL 2004)

ອຸດສາຫະກຳປຸງແຕ່ງໄມ້ມີການຂະຫຍາຍຕົວຢ່າງວ່ອງໄວ. ຈຳນວນໂຮງເລື່ອຍທັງໝົດ (160 ແຫ່ງໃນປີ 2001) ແລະໂຮງງານປຸງແຕ່ງໄມ້ (260 ແຫ່ງ ໃນປີ 2001)ແມ່ນມີສູງຫລາຍຖ້າສົມທຽບໃສ່ກັບຄວາມສາມາດໃນການສະໜອງວັດຖຸດິບ, ລວມທັງການສົ່ງອອກໄມ້ທ່ອນ ແລະ ການບໍລິໂພກໄມ້ທ່ອນໃນການບໍລິໂພກໄມ້ແປຮູບ(620, 000 ມ3 ຕໍ່ປີ) (Sugimoto 2006). ເຖິງວ່າໂຮງງານປຸງແຕ່ງໄມ້ ໄດ້ຮັບການຕີລາຄາວ່າມີຄວາມສາມາດສູງກໍ່ຕາມ, ສູງເຖິງ 1,165,700 ມ3 ຕໍ່ປີ (RCTFC 2007 ) , ແຕ່ຄຸນນະພາບຂອງໂຮງງານເຫົ່ລານັ້ນ ຍັງຕ່ຳຫລາຍເນື່ອງມາຈາການນຳໃຊ້ເຄື່ອງຈັກທີ່ເກົ່າແກ່., ເຕັກໂນໂລຊີຂັ້ນຕ່ຳ ທີ່ມີອັດຕາການການຟື້ນຟູທາງເສດຖະກິດຕ່ຳ ແລະ ພະລິດຕະພັນມີມູນຄ່າເພີ້ມຕ່ຳ ແລະ ບໍ່ມີອະນຸຍາດສົ່ງອອກຜະລິດຕະພັນໄມ້ແປຮູບ.

ການຫັນເປັນເສລີການຄ້າ ເຮັດໃຫ້ມີຜົນກຳໄລທີ່ຄວາມເປັນໄປໄດ້ ຈາກການສ້າງມູນຄ່າເພີ້ມໃຫ້ແກ່ຂະແໜງການໄມ້ ແລະ ຜະລິດຕະພັນໄມ້ແປຮູບ ແລະ ຮຽກຮ້ອງຕ້ອງການໃຫ້ມີການຄຸ້ມຄອງປ່າໄມ້ທີ່ມີຄວາມຍືນຍົງໄປຄຽງຄູ່ກັບການ

ຍັ້ງຢືນປ່າໄມ້ ເພື່ອຂະຫຍາຍອຸດສາຫະກຳໄມ້ຂອງ ສປປ ລາວ, ແລະ ໃນຂະນະດຽວກັນກໍ່ເປັນການເສີມສ້າງຄວາມສາມາດ ແລະ ທັກສະ ຂອງຜູ້ປະກອບການຂອງລາວໃຫ້ສາມາດປະຕິບັດໄດ້ ຕາມມາດຕະຖານທີ່ຈຳເປັນຂອງຕະຫລາດສາກົນ ພ້ອມດ້ວຍໂອກາດໃນການເຂົ້າເຖິງຕະຫລາດໃຫມ່ໆ. ການສົ່ງອອກໄມ້ ແລະ ຜະລິດຕະພັນໄມ້ແປຮູບໃນປະຈຸບັນ ແມ່ນຍັງຂາດການພັດທະນາ.

ເພື່ອໃຫ້ໄດ້ຮັບຜົນປະໂຫຍດຈາກຂໍ້ຕົກລົງການຄ້າໃນຂົງເຂດພາກພື້ນ ແລະ ສາກົນ, ມັນມີຄວາມຈຳເປັນທີ່ຈະຕ້ອງໄດ້ສືບຕໍ່ພັດທະນາຍຸດທະສາດການການປຸງແຕ່ງໄມ້ໃຫ້ຖືກຕ້ອງສອດຄ່ອງກັບຍຸດທະສາດການສົ່ງອອກຂອງ ສປປ ລາວ (MoIC & ITC 2006). ຍຸດທະສາດດັ່ງກ່າວນີ້ຈຳເປັນຕ້ອງໄດ້ກວມເອົາການແຂ່ງຂັນຂອງຂະແໜງການນີ້ໂດຍຜ່ານການເພີ່ມທະວີປະສິດຕິພາບ ແລະ ລະບົບການຄວບຄຸມຄຸນນະພາບ ແລະ ມາດຕະຖານແຫ່ງຊາດ, ໂດຍການເພີ້ມມູນຄ່າ ແລະ ສົ່ງເສີມຄວາມຫລາກຫລາຍສຳລັບຜະລິດຕະພັນໄມ້ແປຮູບຂອງ ສປປ ລາວໃຫ້ໄດ້ຕາມເງື່ອນຈຳເປັນຂອງຕະຫລາດສາກົນ.

## 3.2 ຂໍ້ສະເໜີແນະເພື່ອເປັນນະໂຍບາຍຍຸດທະສາດ.

ລັດຖະບານມີເປົ້າໝາຍເພື່ອຮັບຮອງຄວາມສົມດຸນລະຫ່ວາງການສະໜອງ ແລະ ຄວາມຕ້ອງການ ແລະ ຫລຸດຜ່ອນຜົນກະທົບຕ່າງໆທີ່ມີຕໍ່ຊັບພະຍາກອນປ່າໄມ້ ແລະ ສິ່ງແວດລ້ອມ. ຈຳເປັນຕ້ອງໄດ້ປັບປຸງໂຮງງານປຸງແຕ່ງໄມ້ໂດຍການນຳໃຊ້ມາດຕະຖານທີ່ເໝາະສົມ ແລະ ໂປ່ງໃສ. ຂໍ້ສະເໜີແນະເພື່ອໃຫ້ລັດຖະບານພິຈາລະນາມີຄື:

- **ສຸກຍູ້ການສ້າງມູນຄ່າເພີ່ມເພື່ອກະຕຸ້ນອຸດສະຫະກຳປຸງແຕ່ງ ແລະ ເພື່ອຮັບເອົາຜົນຕອບແທນທາງດ້ານເສດຖະກິດໃຫ້ໄດ້ຫລາຍຍິ່ງຂຶ້ນໃນຂະນະທີ່ຫລຸດຜ່ອນການນຳໃຊ້ຊັບພະຍາກອນໂດຍຜ່ານ:**
  - **ສືບຕໍ່ດັດສົມຂະແໜງການປຸງແຕ່ງໄມ້ແຫ່ງຊາດ**
  - ພັດທະນາມາດຕະການ ແລະ ຂັ້ນຕອນທີ່ເໝາະສົມສຳລັບໂຮງງານປຸງແຕ່ງໄມ້, ເປີດເຜີຍຕໍ່ມະຫາຊົນ ແລະ ດຳເນີນການປິດ / ການຮວມຕົວໃນຮູບການທີ່ມີຄວາມໂປ່ງໃສ;
  - ສືບຕໍ່ຈັດຕັ້ງປະຕິບັດຄຳສັ່ງຂອງນາຍົກລັດຖະມົນຕີທີ່ຫ້າມການລົງທຶນເຂົ້າໃນການປຸງແຕ່ງໄມ້ ແລະ ເຄື່ອງປ່າຂອງດົງທີ່ເພິ່ງພາວັດຖຸດິບຈາກທຳມະຊາດ ແລະ ການລົງທຶນຂອງຕ່າງປະເທດເຂົ້າໃນການສຳປະທານປ່າໄມ້ທຳມະຊາດເພື່ອປົກປ້ອງຜູ້ຜະລິດຜະລິດຕະພັນເຄິ່ງສຳເລັດຮູບ ແລະ ສຳເລັດຮູບຢູ່ພາຍໃນ, ແລະ ເພື່ອຫລີກລ້ຽງຄວາມກົດດັນທີ່ມີຕໍ່ຊັບພະຍາກອນທຳມະຊາດ;
  - ນອກຈາກມາດຕະການດ້ານລະບຽບກົດໝາຍແລ້ວ ຍັງຕ້ອງໄດ້ພັດທະນາໂຄງການໃຫ້ສິ່ງຈູງໃຈທີ່ມີຄວາມເໝາະສົມເພື່ອກະຕຸກຊຸກຍູ້ອຸດສາຫະກຳປຸງແຕ່ງໄມ້ໃຫ້ນຳໃຊ້ໄມ້ຈາກການປູກປ່າ ແລະ ຈາກປ່າຜະລິດທີ່ມີການຄຸ້ມຄອງທີ່ຍືນຍົງ.

  - **ສ້າງມູນຄ່າເພີ່ມເພື່ອກະຕຸ້ນອຸດສະຫະກຳປຸງແຕ່ງ ແລະ ເພື່ອຮັບເອົາຜົນຕອບແທນທາງດ້ານເສດຖະກິດໃຫ້ໄດ້ຫລາຍຍິ່ງຂຶ້ນໃນຂະນະທີ່ຫລຸດຜ່ອນການນຳໃຊ້ຊັບພະຍາກອນໂດຍຜ່ານ:**

- **ສ້າງໃຫ້ນະໂຍບາຍແບບສອງສົ້ນ (dual policies) ກ່ຽວກັບການປູກປ່າ ແລະ ປ່າຜະລິດໃຫ້ມີຄວາມເຂັ້ມແຂງເພື່ອຮັບປະກັບໃຫ້ການສະໜອງໄມ້ທີ່ມີຄວາມຍືນຍົງໃຫ້ແກ່ຂະແໜງການໄມ້ ແລະ ຜະລິດຕະພັນໄມ້**
  - ສ້າງແຜນການຄຸ້ມຄອງປ່າໄມ້ທີ່ມີຄວາມຍືນຍົງສຳລັບເຂດປ່າຜະລິດ (PFA) ໃນຂອບເຂດທົ່ວປະເທດໃຫ້ສຳເລັດໄປພ້ອມໆກັບການບັງຄັບໃຊ້ກົດໝາຍ;
  - ສືບຕໍ່ສະໜັບສະໜູນການສ້າງຮູບແບບການຄຸ້ມຄອງປ່າໄມ້ບ້ານ;
  - ຮັບປະກັບໃຫ້ການຂຸດຄົ້ນໄມ້ຢູ່ບົນພື້ນຖານການອະນຸຍາດໃຫ້ຕັດປະຈຳປີທີ່ຜ່ານການຄາດຄະເນຢ່າງມີວິທະຍາສາດ;
  - ພິຈາລະນາການປະກາດ ປິດພື້ນທີ່ປ່າໄມ້ຊົ່ວຄາວ ໃນບ່ອນທີ່ມີການຕັດໄມ້ຫລາຍກວ່າ ຄວາມສາມາດສະໜອງໄດ້ຂອງປ່າໄມ້. ການປິດປ່າຖາວອນແມ່ນສຳລັບພື້ນທີ່ລຽບຕາມແຄມນ້ຳ ແລະ ເຂດອ່າງໂຕ່ງ;

- ສົ່ງເສີມຄວາມພະຍາຍາມໃນການຟື້ນຟູພື້ນທີ່ເຊື່ອມໂຊມທັງຢູ່ໃນ ແລະ ນອກພື້ນທີ່ປ່າຜະລິດ;
- ກຳນົດຈັດສັນທີ່ດິນ ແລະ ທີ່ດິນປ່າໄມ້ ແລະ ມາດຕະຖານການຈັດປະເພດໃຫ້ຈະແຈ້ງໃນຂອບເຂດທົ່ວປະເທດເພື່ອປົກປ້ອງດິນປ່າສະຫງວນຈາກການນຳໃຊ້ອື່ນໆ.
- ກຳນົດລະບຽບການໃຫ້ຈະແຈ້ງ, ລວມທັງບາດກ້າວຕ່າງໆ, ຂັ້ນຕອນ ແລະ ການຮັບຮອງທີ່ໄດ້ຮັບການຕົກລົງເຫັນດີເພື່ອເອື້ອອຳນວຍໃຫ້ແກ່ການລົງທຶນເຂົ້າໃນການປູກໄມ້.
- ສົ່ງເສີມ ແລະ ຄົ້ນຄວ້າການນຳໃຊ້ ແລະ ຄຸນລັກຊະນະສະເພາະຂອງຊະນິດໄມ້ທີ່ບໍ່ໄດ້ຮັບຄວາມນິຍົມໃນທາງການຄ້າໃນປະຈຸບັນເພື່ອເຮັດໃຫ້ຖານວັດຖຸດິບມີຄວາມຫລາກຫລາຍ ແລະ ເພີ້ມຫລາຍຂື້ນ.

## ສົ່ງເສີມການຂະຫຍາຍການຍັ້ງຍືນການຄຸ້ມຄອງປ່າໄມ້.

- ສືບຕໍ່ສົ່ງເສີມການຂະຫຍາຍການຍັ້ງຍືນ ການຄຸ້ມຄອງປ່າໄມ້ໂດຍຜ່ານການພັດທະນາເຄືອຄ່າຍປ່າໄມ້ ແລະ ການສົ່ງອອກໄມ້ ແລະ ຢູ່ບົນພື້ນຖານການຄຸ້ມຄອງປ່າໄມ້ທີ່ມີຄວາມຍືນຍົງ;
- ສືບຕໍ່ສ້າງຄວາມຮັບຮູ້ກ່ຽວກັບປ່າໄມ້ທີ່ໄດ້ຕາມມາດຕະຖານ ແລະ ດັດສະນີຊີ້ວັດແຫ່ງຊາດ (C&I) ສຳ ລັບການຄຸ້ມຄອງປ່າຜະລິດທີ່ມີຄວາມຍືນຍົງ, ພັດທະນາ C&I ສຳລັບປ່າປູກ;
- ສ້າງຄວາມຮັບຮູ້ ແລະ ພັດທະນາການຍັ້ງຍືນຮ່ອງໂສ້ກຳມະສິດໃນການຄຸ້ມຄອງ (Chain of Custody Verification) ໃນອຸດສາຫະກຳ;
- ດຳເນີນການສ້າງຄວາມຮັບຮູ້ ແລະ ຈັດຕັ້ງການຝຶກອົບຮົມກ່ຽວກັບການຍັ້ງຍືນປ່າໄມ້, ການຍັ້ງຍືນຮ່ອງໂສ້ກຳມະສິດໃນການຄຸ້ມຄອງໃຫ້ແກ່ຜູ້ປະກອບການ ( ເບິ່ງໃນເອກະສານຄັດຕິດ 3).

## ສືບຕໍ່ປັບປຸງການປະຕິບັດກົດໝາຍໃນຂະແໜງການປ່າໄມ້( ການບໍລິຫານລັດ ແລະ ການຄ້າ )

- ສ້າງຄວາມເຂັ້ມແຂງໃນການຈັດຕັ້ງປະຕິບັດນະໂຍບາຍ ແລະ ລະບຽບການຕ່າງໆກ່ຽວກັບການຕັດ ແລະ ສົ່ງອອກໄມ້ທ່ອນທີ່ບໍ່ຖືກຕ້ອງຕາມກົດໝາຍ;
- ຮ່ວມມືກັບຄູ່ຮ່ວມການຄ້າໃນ ເອີຣົບ ແລະ ໃນຂົງເຂດພາກພື້ນໃນການປະຕິບັດກົດໝາຍ; ການບໍລິຫານລັດ ແລະ ການຄ້າທີ່ດີ;
- ຮ່ວມມືກັບພາສີ, ຕຳຫລວດ ແລະ ໜ່ວຍງານສະເພາະກິດຕ່າງໆໃນຂົງເຂດພາກພື້ນເພື່ອຄວບຄຸມການຄ້າໄມ້ທີ່ບໍ່ຖືກຕ້ອງຕາມກົດໝາຍ;
- ປັບປຸງການຕິດຕາມກວດການຕັດໄມ້ຢູ່ນອກເຂດທີ່ໄດ້ຮັບອະນຸຍາດໃຫ້ເຂັ້ມແຂງ ແລະ ສ້າງມາດຕະການສະກັດກັ້ນການຕັດໄມ້ທີ່ບໍ່ໄດ້ຮັບອະນຸຍາດ.
- ຈັດຕັ້ງປະຕິບັດການຫ້າມສົ່ງອອກໄມ້ທ່ອນ ແລະ ຄຳສັ່ງເພື່ອຫລຸດຜ່ອນໄມ້ເລື່ອຍຢ່າງເຂັ້ມງວດ, ເພື່ອຮັບປະກັນວ່າທຸກການສົ່ງອອກຕ້ອງແມ່ນ ຮູບແບບການສົ່ງອອກຜະລິດຕະພັນໄມ້ແປຮູບເທົ່ານັ້ນ.
- ໂກຕາການຕັດໄມ້ຄວນໄດ້ຮັບການຮັບຮອງແບບເຄັ່ງຄັດທີ່ສຸດໂດຍອີງຕາມແຜນການຄຸດຄົ້ນໄມ້; ຫ້າມທຸກການຄຸດຄົ້ນໄມ້ທີ່ບໍ່ມີ ໂກຕາ ທີ່ຜ່ານການຮັບຮອງ;

## ສົ່ງເສີມກົນໄກການຮ່ວມມື ລະຫວ່າງພາກລັດ ແລະ ພາກເອກະຊົນ, ລວມທັງຂະແໜງການປ່າໄມ້, ປູກໄມ້ ແລະ ປຸງແຕ່ງໄມ້.

- ສືບຕໍ່ເຮັດວຽກຮ່ວມກັບສະມາຄົມປຸງແຕ່ງໄມ້ຂອງລາວ ( Lao Wood Processing Association ) ກ່ຽວກັບໂຄງການຈັດສັນ ໂກຕ້າ;
- ສ້າງເວທີປຶກສາຫາລືສຳລັບພາກເອກະຊົນ/ພາກລັດ ເພື່ອເອື້ອອຳນວຍໃຫ້ທຸກພາກສ່ວນທີ່ກ່ຽວຂ້ອງກັບ ບັນຫາປ່າໄມ້, ການປູກໄມ້, ແລະ ການແປຮູບໄມ້ເຂົ້າຮ່ວມ;
- ປັບປຸງກົນໄກການສະໜອງທຶນ ແລະ ສິ່ງຈູງໃຈຕ່າງໆສຳລັບກິດຈະກຳຕ່າງໆເພື່ອສົ່ງເສີມໃຫ້ມີການປະ ຕິບັດທີ່ດີໃນພາກເອກະຊົນ;
- ພັດທະນາຍຸດທະສາດທີ່ຮັບປະກັນ ໃຫ້ຄວາມເປັນຫວ່ງກັງວົນຕ່າງໆ ໃນດ້ານສິ່ງແວດລ້ອມຖືກລວມເຂົ້າໃນທຸກ ຂະບວນການຕັດສິນບັນຫາຂອງພາກເອກະຊົນ.

# ເອກະສານອ້າງອີງ


CPI 2006. *Sixth National Socio Economic Development Plan (2006-2010).* Vientiane: Committee for Planning and Investment.

CPI & UNDP 2006. *National Human Development Report: International Trade and Human Development Lao PDR.* Vientiane: Committee for Planning and Investment and the United Nations Development Program.

DoF & MAF 2005. *Report on assessment of forest cover and land use during 1992-20*02. Vientiane: Department of Forestry and Ministry of Agriculture and Forestry.

IKEA 2007. IKEA, Sweden, viewed 4 June 2007, <www.ikea.com>.

IISD & IUCN 2007.*Rapid Trade and Environment Assessment Project – National Report for Lao PDR*. Winnipeg: International Institute for Sustainable Development and IUCN – The World Conservation Union.

MAF 2005. *Forestry Strategy to the year 2020*. Vientiane: Ministry of Agriculture and Forestry.

MAF & NAFES 2005. *Final Draft Report on Sawmill Survey in SUFORD Project Provinces.* Vientiane: Ministry of Agriculture and Forestry and the National Agriculture and Forestry Extension Service.

MoIC & ITC 2006, *National Export Strategy for Lao PDR 2006-2008 - Sectoral Strategyfor the Wood Sector.* Vientiane: Ministry of Industry and Commerce and Industry and the International Trade Center, December.

GoL 2004. *National Growth and Poverty Eradication Strategy* (NGPES). Vientiane: Government of Lao PDR.

Phanthanousy, B. & S. Sayakoummane 2005. *Community Forestry in Production Forests*, viewed 13 May 2007, <www.recoftc.org/site/fileadmin/docs/publications/The_Grey_Zone/2006>.

RCFTC (Regional Community Forestry Training Center) 2007. *Status of Community Based Forest Management in Lao PDR*, National Agriculture & Forestry Research Institute (NAFRI), viewed 6 June 2007, <www.nafri.org.la>.

Southavilay, T. 2002. *Wood Processing in Lao PDR - A Comprehensive Framework to Foster Economic Initiative in Lao PDR*. United Nations Industrial Development Organisation (UNIDO), viewed 6 June 2007, <www.unido.org>.

Sugimoto, S. 2006. *Final Report on Indicators for Monitoring of Sector Performance.* Vientiane: Department of Forestry, unpublished.

*Vientiane Times* 2007. ”Substandard Wood Factories to Close Down,”, 11 May.

White, A., Sun, X., Canby, K., Xu, J., Barr, C., Katsigris, E., Bull, G., Cossalter, C. and S. Nilsson 2006. *China and the Global Market for Forest Products: Transforming Trade to Benefit – Forests and Livelihoods*, Forest Trends, viewed 10 May 2007, <www.foresy-trends.org>.

World Bank 2006. *Economic Monitor Lao PDR.* Vientiane: World Bank, November.


## ເອກະສານຄັດຕິດ 1: ມູນຄ່າການສົ່ງອອກໄມ້ ( ລ້ານດອນລາສະຫະລັດ US$) ແລະ ເປີເຊັນ

## ຂອງການສົ່ງອອກທັງໝົດ ໃນປີ 2004-2005

(source CPI & UNDP 2006)

| | 2000 | | 2001 | | 2002 | | 2003 | | 2004 | |
|---|---|---|---|---|---|---|---|---|---|---|
| | US$ | % | US$ | % | US$ | % | US$ | % | US$ | % |
| **ການສົ່ງອອກໄມ້** | 70.1 | 18.1 | 106.8 | 26.6 | 114.3 | 28.4 | 128.4 | 25.7 | 144.9 | 24.7 |
| **ການສົ່ງອອກທັງໝົດ** | 387.9 | 100 | 401.8 | 100 | 402.6 | 100 | 500.2 | 100 | 586.6 | 100 |

## ເອກະສານຄັດຕິດ 2: ການສົ່ງໄມ້ ແລະ ໄມ້ແປຮູບອອກໄປປະເທດໄທ

(ITC 2006)

| ການສົ່ງອອກໄມ້ ແລະ ພະລິດຕະພັນໄມ້ຂອງ ສປປ ລາວ ໄປປະເທດໄທ, 2001-2004 ( US$) | | | | | |
|---|---|---|---|---|---|
| | 2001 | 2002 | 2003 | 2004 | 2004 Share |
| ໄມ້ຟືນ | 768,337 | 19,601 | 18,908 | 100,818 | |
| ຖ່ານ | 1,928 | 10,131 | 12,011 | 28,245 | |
| ໄມ້ທ່ອນ | 15,218,683 | 1,474,031 | 1,107,663 | 3,080,099 | |
| ໄມ້ໝອນຮອງທາງລົດໄຟ | 61,228 | 59,258 | 22,252 | 1,185 | |
| ໄມ້ເລື່ອຍ | 50,230,112 | 71,950,059 | 73,955,863 | 61,311,098 | **74.45%** |
| ໄມ້ຝານສຳລັບແຜ່ນກາຕິງແລະໄມ້ອັດ | 185,581 | 412,585 | 1,750,491 | 1,560,211 | |
| ໄມ້ (ລວມທັງໄມ້ເສັ້ນສຳລັບໄມ້ປາກເກ້ ປູພື້ນ)ທີ່ຍັງບໍ່ທັນໄດ້ຕໍ່ເປັນແຜ່ນ, ຍັງບໍ່ທັນໄດ້ປັບຂະ ໜາດ, ຍັງບໍ່ທັນໄດ້ກົບ | 1,232,079 | 1,368,765 | 3,758,369 | 4,924,991 | |
| ໄມ້ອັດ, ໄມ້ຝານ, ວົງກົບ | 813,663 | 852,409 | 3,369,489 | 11,170,973 | |
| ເຟີເຈີ້ , ໄມ້ປຸກສ້າງ | 36,033 | 55,400 | 114,500 | 170,180 | **0.21%** |
| ລວມ | **68,547,644** | **76,202,239** | **84,109,546** | **82,347,800** | |

## ເອກະສານຄັດຕິດ 3: ບາດກ້າວທີ່ມີຄວາມເປັນໄປໄດ້ສຳລັບການພັດທະນາການຍັ້ງຢືນ ແລະ ການຢືນຢັນຮ່ວງໂສ້ກຳມະ ສິດໃນການຄຸ້ມຄອງ ( CoC )

- ດຳເນີນການສຳຫລວດຄວາມເຕັມໃຈຂອງວິສາຫະກິດທີ່ຈະຮັບເອົາ CoC ຫລື ລະບົບການຄວບຄຸມຄຸນນະພາບ;
- ດຳເນີນການທົບທວນໃນເບື້ອງຕົ້ນ ໃນບັນດາວິສາຫະກິດທີ່ຖືກຄັດເລືອກທີ່ສະແດງໃຫ້ເຫັນວ່າມີຜົນກຳໄລໃນການປະກອບການຂອງເຂົາເຈົ້າ, ລວມທັງການຊື້ໄມ້, ແລະ ສ້າງຂັ້ນຕອນໃນການຄຸ້ມຄອງລວມທັງການບັນທຶກຕ່າງໆ. ກະ ກຽມການວິເຄາະ ແລະ ການສະຫລຸບໂດຍອີງຕາມສິ່ງທີ່ກ່າວມາຂ້າງເທິງ. ປຶກສາຫາລືກັບອຸດສາຫະກຳກ່ຽວກັບການ ນຳໃຊ້ລະບົບການບໍລິຫານຄຸນນະພາບ/ ການຍັ້ງຢືນ CoC ຫລື ການສະເໜີຂໍການສະເໜີລາຄາຈາກອົງການຈັດຕັ້ງສາກົນທີ່ອອກການຍັ້ງຢືນ.
- ຊ່ວຍບັນດາວິສາຫະກິດທີ່ໄດ້ຮັບການຄັດເລືອກ ໃນຂັ້ນສຸດທ້າຍໃນການສ້າງລະບົບການບໍລິຫານຈັດການຂອງຕົນເອງຂຶ້ນເຊິ່ງເປັນສິ່ງທີ່ສາມາດກວດສອບບັນຊີໄດ້ ແລະ ຫລື ລະບົບ CoC ທີ່ສາມາດຍັ້ງຢືນໄດ້.

- ສະໜອງການສະໜັບສະໜູນດ້ານການເງິນໃຫ້ແກ່ວິສາຫະກິດທີ່ມີຜົນການປະກອບການດີເດັ່ນທີ່ດີເດັ່ນ ( ຕ້ອງໄດ້ກຳ ນົດມາດຕະຖານ )  ເພື່ອຮອງຮັບຄ່າສິ້ນເປືອງໃນການຢັ້ງຢືນ CoC .
- ສົ່ງເສີມ ແລະ ສ້າງຄວາມສາມາດຂອງອຸດສາຫະກຳໂດຍ ຜ່ານສະມາຄົມອຸດສາຫະກຳໄມ້ເພື່ອປັບປຸງອັດຕາການຟື້ນຟູໃນອຸດສາຫະກຳເພື່ອໃຫ້ເປັນສ່ວນໜຶ່ງໃນການຄຸ້ມຄອງສະພາບແວດລ້ອມຂອງຂະແໜງການອຸດສາຫະກຳ.

## ເອກະສານຄັດຕິດ 4: ການຄ້າ ແລະ ສິ່ງແວດລ້ອມກ່ຽວກັບໄມ້ແປຮູບ ແລະ ຂະບວນການແປຮູບຂອງຂະແໜງການ

| ປະເພດ | ແຮງພັກດັນ | ຄວາມກົດດັນ | ຜົນກະທົບ | ປັດໃຈສຳລັບການແກ້ໄຂ | ຕົວຢ່າງ |
|---|---|---|---|---|---|
| ຜົນຮັບຈາກຂະໜາດ | ຕະຫລາດຕ່າງປະເທດສຳລັບໄມ້ ແລະ ຜະລິດຕະພັນໄມ້ແປ ຮູບເພີ້ມຂື້ນ | ຂະໜາດຂອງການຜະລິດໄມ້ແປຮູບຈາກປ່າທຳມະຊາດ ແລະ ປ່າປູກເພີ້ມຂື້ນ | ການຄຸດຄົ້ນໄມ້ ແລະ ຄວາມຕ້ອງການໄມ້ເພື່ອແປຮູບເຮັດໃຫ້ມີຄວາມກົດດັນຫລາຍຂື້ນຕໍ່ກັບຊັບພະຍາກອນທຳມະຊາດ.<br>ເນື້ອທີ່ປູກຝັງ ແລະ ປູກໄມ້ຫລາຍຂື້ນ, ເຮັດໃຫ້ມີຄວາມກົດດັນຕໍ່ການນຳໃຊ້ທີ່ດິນ-ມີຄວາມຄັດ ແຍ່ງຕໍ່ກັບການທັບປ່ຽນປ່າທຳມະຊາດ ແລະ ທີ່ດິນກະສິ ກຳ | ການປະເມີນລະ ບົບການຈັດໂກຕ້າ (ແຜນການຕັດໄມ້-ໂກຕ້າການຕັດໄມ້ປະຈຳປີ) ກະຕຸກຊຸກຍູ້ໃຫ້ຕະຫລາດນຳໃຊ້ໄມ້ຫລາຍຊະນິດພັນແທນທີ່ຈະໃຊ້ສອງສາມຊະນິດພັນທີ່ໄດ້ກຳນົດໃນ ເງື່ອນໄຂມາດຖານຈຳເປັນຂອງຕະຫລາດ | ເບິ່ງກໍລະນີສຶກສາກ່ຽວກັບການຄຸດຄົ້ນໄມ້/ ລະ ບົບໂກຕ້າທີ່ບໍ່ມີຄວາມຍືນຍົງ ກະຕຸກຊຸກຍູ້ການນຳໃຊ້ໄມ້ຈາກການປູກປ່າ |
| ຜົນຮັບຈາກຂະໜາດ | ອຸປະສັກໃນການສົ່ງອອກຫລຸດລົງ- ພາສີຂາເຂົ້າ- ອອກຕ່ຳລົງ-ເງິນທຶນສຳຮອງ ຫລຸດລົງ | ຄຸນນະພາບ ແລະ ປະລິມານຂອງຜະລິດຕະພັນໄມ້ ແລະ ຜະ ລິດຕະພັນໄມ້ສູງຂື້ນ | ການນຳໃຊ້ໄມ້ຊະນິດພັນອື່ນໆໄດ້ຮັບການກະຕຸກຊຸກຍູ້, ລວມທັງກົ່ງງ່າ ແລະ ໄມ້ເສດອື່ນໆ, ແລະ ຈາກປ່າປູກ.<br>ທີ່ດິນສຳລັບປ່າທຳມະຊາດທີ່ໄດ້ຮັບການປັບ ປຸງ/ ປ່າຜະລິດ / ປ່າໄມ້ບ້ານ ມີການຂະຫຍາຍຕົວ | ການກະກຽມຍຸດທະສາດສຳ ລັບວົງຈອນທັງໝົດຂອງການປຸງແຕ່ງຮູບໄມ້ເພື່ອ ບໍ່ໃຫ້ມີ ອຸປະສັກ ດ້ານພາສີຂາເຂົ້າ- ອອກ ແລະ ເພື່ອຫລຸດຜ່ອນ ການຕັດໄມ້ທຳລາຍປ່າທີ່ບໍ່ມີຄວາມຍືນຍົງ | ການກະກຽມຍຸດທະສາດການຄ້າແລະການສົ່ງ ອອກແຫ່ງຊາດ |
| ຜົນຮັບຈາກເທັກ ໂນໂລ ຊີ | ຕະຫລາດຕ່າງປະເທດສຳລັບຜະລິດຕະພັນໄມ້ ແລະ ຜະລິດຕະພັນໄມ້ແປຮູບເພີ້ມ ຂື້ນ | ການລົງທຶນໃໝ່ນຳ ເອົາເທັກໂນໂລຊີໃໝ່ເຂົ້າມານຳໃຊ້ ເພື່ອປັບປຸງການປຸງແຕ່ງໄມ້ທີ່ເຮັດໃຫ້ຜົນຜະ ລິດ ຫລືປະສິດທິພາບຂອງຜະລິດຕະ ພັນໄມ້ແປຮູບເພີ້ມຂື້ນ ( ໃນ ດ້ານຄຸນນະ ພາບ ) | ການນຳໃຊ້ວັດຖຸດິບ ຈາກ ປ່າທຳມະຊາຫລຸດລົງ, ນຳ ໃຊ້ປ່າປູກໃນອານາຄົດ | | ເບິ່ງໃນການຍັ້ງຢືນປ່າໄມ້ທີ່ເຮັດໃຫ້ແຜນການຄຸ້ມຄອງປ່າໄມ້ມີຄວາມຍືນຍົງ |
| ຜົນຮັບຈາກໂຄງ ສ້າງ | ການຄ້າເຮັດໃຫ້ຜະລິຕະພັນໄມ້ທີ່ມີຜະລິດຕະພາບສູງຂະຫຍາຍຕົວ ແລະ ມີສິ່ງເສດເຫລືອ ນ້ອຍລົງເພື່ອໃຫ້ໃຫ້ໄດ້ຕາມເງື່ອນໄຂມາດຖານທີ່ຈຳເປັນ | ຫົວໜ່ວຍທຸລະກິດໃນທ້ອງຖິ່ນຕ້ອງ ການໄມ້ຫລາຍຂື້ນ | ຄວາມຕ້ອງການໄມ້ ( ໄມ້ເລື່ອຍ) ຫລາຍຂື້ນ<br>1. ມີຄວາມຕ້ອງການຊັບພະຍາກອນທຳມະຊາດຫລາຍ ກວ່າຈາກການປູກໄມ້**ຫລື**<br>**2.** ໄມ້ທີ່ສົ່ງອອກໃນປະຈຸບັນມີມູນຄ່າຕ່ຳ ( ຕົວຢ່າງ: ໄມ້ເລື່ອຍ) ເປັນສິ່ງທ້າທາຍ ສຳລັບອຸດສາຫະກຳພາຍໃນ | ຈຳເປັນຕ້ອງມີລະບຽບການຄຸ້ມຄອງໄມ້ທີ່ມີປະສິດທິພາບ-ທົບທວນລະບົບທີ່ມີ ໃນປະຈຸບັນເພື່ອຮັບປະກັນໃຫ້ມີເທັກໂນໂລຊີ ທີ່ພຽງພໍສຳລັບຜະລິດຕະພັນໄມ້ແປຮູບ ສຳລັບໄມ້ເກືອບທັງໝົດທຸກຊະນິດ ແລະການສົ່ງເສີມທັກສະສຳລັບການປຸງແຕ່ງໄມ້ໃນປະເທດ | ເທກໂນໂລີທີ່ມີຄວາມເໝາະສົມເຮັດໃຫ້ຜະລິດຕະພັນໄມ້ມີພຽງພໍ ແລະ ໄດ້ຕາມມາດຕະຖານສາກົນ ແລະ ເງື່ອນໄຂຈຳເປັນຂອງຕະຫລາດ |